ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 114 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 12 ສິງຫາ 2024

# ລັດຖະດຳລັດ

## ກ່ຽວກັບການປະກາດໃຊ້ ກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ)

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015) ໝວດທີ VI ມາດຕາ 67 ຂໍ້ 1;
- ອີງຕາມ ມະຕິຂອງກອງປະຊຸມສະພາແຫ່ງຊາດ ສະບັບເລກທີ 120/ສພຊ, ລົງວັນທີ 28 ມິຖຸນາ 2024 ກ່ຽວກັບການຮັບຮອງເອົາ ກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ);
- ອີງຕາມ ໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ ສະບັບເລກທີ 14/ຄປຈ, ລົງວັນທີ 29 ກໍລະກົດ

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

**ມາດຕາ 1** ປະກາດໃຊ້ ກົດໝາຍວ່າດ້ວຍ ການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ).

**ມາດຕາ 2** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ທອງລຸນ ສີສຸລິດ

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ**

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 120 / ສພຊ

ນະຄອນຫຼວງວຽງຈັນ, ວັນທີ 28 / 06 / 24

**ມະຕິ**

**ກອງປະຊຸມສະພາແຫ່ງຊາດ**

**ກ່ຽວກັບການຮັບຮອງເອົາກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ)**

- ອີງຕາມລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ສະບັບເລກທີ 63/ສພຊ, ລົງວັນທີ 8 ທັນວາ 2015 ມາດຕາ 53 ຂໍ້ 1;
- ອີງຕາມກົດໝາຍວ່າດ້ວຍການປັບປຸງບາງມາດຕາຂອງກົດໝາຍວ່າດ້ວຍສະພາແຫ່ງຊາດ ແລະ ກົດໝາຍວ່າດ້ວຍສະພາປະຊາຊົນຂັ້ນແຂວງ ສະບັບເລກທີ 82/ສພຊ, ລົງວັນທີ 30 ມິຖຸນາ 2020 ມາດຕາ 11 ຂໍ້ 1.

ພາຍຫຼັງທີ່ກອງປະຊຸມສະໄໝສາມັນ ເທື່ອທີ 7 ຂອງສະພາແຫ່ງຊາດ ຊຸດທີ IX ໄດ້ຄົ້ນຄວ້າພິຈາລະນາຢ່າງກວ້າງຂວາງ ແລະ ເລິກເຊິ່ງ ກ່ຽວກັບເນື້ອໃນຂອງກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ) ໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 18 ມິຖຸນາ 2024 ແລະ ຖືກພິຈາລະນາຮັບຮອງເອົາໃນວາລະຕອນເຊົ້າຂອງກອງປະຊຸມ ຄັ້ງວັນທີ 28 ມິຖຸນາ 2024.

**ກອງປະຊຸມສະພາແຫ່ງຊາດ ຕົກລົງ:**

ມາດຕາ 1 ຮັບຮອງເອົາກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ (ສະບັບປັບປຸງ) ດ້ວຍຄະແນນສຽງຫຼາຍກວ່າເຄິ່ງໜຶ່ງ ຂອງຈຳນວນສະມາຊິກສະພາແຫ່ງຊາດ ທີ່ເຂົ້າຮ່ວມກອງປະຊຸມ.

ມາດຕາ 2 ມະຕິສະບັບນີ້ ມີຜົນສັກສິດນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

ປະທານສະພາແຫ່ງຊາດ

ປອ ໄຊສົມພອນ ພົມວິຫານ

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ສະພາແຫ່ງຊາດ

ເລກທີ 52 /ສພຊ

ນະຄອນຫຼວງວຽງຈັນ, ວັນທີ 28 ມິຖຸນາ 2024

# ກົດໝາຍ
# ວ່າດ້ວຍການຕ້ານການສໍ້ລາດບັງຫຼວງ
# (ສະບັບປັບປຸງ)

## ພາກທີ I
## ບົດບັນຍັດທົ່ວໄປ

**ມາດຕາ 1 (ປັບປຸງ) ຈຸດປະສົງ**

ກົດໝາຍສະບັບນີ້ ກໍານົດ ຫຼັກການ, ລະບຽບການ ແລະ ມາດຕະການ ກ່ຽວກັບການຕ້ານການສໍ້ລາດບັງຫຼວງ ເພື່ອບໍ່ໃຫ້ຊັບສິນຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ ຖືກເສຍຫາຍຈາກການສໍ້ລາດບັງຫຼວງ ແລະ ນໍາເອົາຜູ້ກະທໍາຜິດ ມາດໍາເນີນຄະດີ, ປົກປ້ອງຜູ້ບໍລິສຸດ ແນໃສ່ຮັບປະກັນໃຫ້ອົງການລັດມີຄວາມໂປ່ງໃສ, ເຂັ້ມແຂງ ສາມາດກວດກາໄດ້ທຸກເວລາ ປະກອບສ່ວນເຂົ້າໃນການຮັກສາສະຖຽນລະພາບທາງດ້ານການເມືອງ, ເຮັດໃຫ້ເສດຖະກິດ ມີການຂະຫຍາຍຕົວ ແລະ ໝັ້ນຄົງ, ສັງຄົມມີຄວາມສະຫງົບ, ມີຄວາມເປັນລະບຽບຮຽບຮ້ອຍ ແລະ ຍຸຕິທໍາ.

**ມາດຕາ 2 (ປັບປຸງ) ການຕ້ານການສໍ້ລາດບັງຫຼວງ**

ການຕ້ານການສໍ້ລາດບັງຫຼວງ ແມ່ນ ການກໍາຈັດ ແລະ ລົບລ້າງທຸກພຶດຕິກໍາ ທີ່ເປັນການສໍ້ລາດບັງຫຼວງ ດ້ວຍການສະກັດກັ້ນ, ການກວດກາ, ການສືບສວນ-ສອບສວນ, ການນໍາໃຊ້ມາດຕະການທາງກົດໝາຍ ແລະ ການປະຕິບັດຄໍາຕັດສິນຂອງສານ.

**ມາດຕາ 3 (ປັບປຸງ) ການອະທິບາຍຄໍາສັບ**

ຄໍາສັບທີ່ນໍາໃຊ້ໃນກົດໝາຍສະບັບນີ້ ມີຄວາມໝາຍ ດັ່ງນີ້:

1. **ພະນັກງານ** ໝາຍເຖິງ ພະນັກງານຂອງລັດ, ພະນັກງານວິສາຫະກິດ, ພະນັກງານຕ່າງປະເທດ ແລະ ພະນັກງານອົງການຈັດຕັ້ງສາກົນ;

2. **ພະນັກງານຂອງລັດ** ໝາຍເຖິງ ພະນັກງານນໍາພາ, ພະນັກງານຄຸ້ມຄອງ, ພະນັກງານ-ລັດຖະກອນ, ທະຫານ, ຕໍາຫຼວດ, ພະນັກງານລັດວິສາຫະກິດ, ພະນັກງານລັດວິສາຫະກິດປະສົມ, ລັດຮຸ້ນສ່ວນ, ກອງບໍລິ

ຫານວິຊາການ, ການຈັດຕັ້ງການຜະລິດ, ທຸລະກິດ ທີ່ລັດຈັດຕັ້ງຂຶ້ນ ແລະ ຜູ້ໄດ້ຮັບມອບສິດ, ໜ້າທີ່ ໃດໜຶ່ງ ຈາກທາງການ;

3. **ພະນັກງານວິສາຫະກິດ** ໝາຍເຖິງ ພະນັກງານວິສາຫະກິດເອກະຊົນ ທັງພາຍໃນ ແລະ ຕ່າງປະເທດທີ່ມາເຄື່ອນໄຫວທຸລະກິດ ຢູ່ ສປປ ລາວ;

4. **ພະນັກງານຕ່າງປະເທດ** ໝາຍເຖິງ ພະນັກງານລັດຂອງປະເທດໃດໜຶ່ງ ທີ່ຖືກແຕ່ງຕັ້ງຈາກປະເທດນັ້ນ ໃຫ້ມາເຄື່ອນໄຫວວຽກງານ ຢູ່ ສປປ ລາວ;

5. **ພະນັກງານອົງການຈັດຕັ້ງສາກົນ** ໝາຍເຖິງ ພະນັກງານທີ່ໄດ້ຮັບການແຕ່ງຕັ້ງ ຫຼື ໄດ້ຮັບອະນຸຍາດຈາກອົງການຈັດຕັ້ງສາກົນໃດໜຶ່ງ ໃຫ້ມາເຄື່ອນໄຫວວຽກງານ ຢູ່ ສປປ ລາວ ໃນນາມອົງການນັ້ນ;

6. **ບຸກຄົນອື່ນທີ່ຢູ່ໃນການຄຸ້ມຄອງຂອງຕົນ** ໝາຍເຖິງ ຜົວ ຫຼື ເມຍ, ລູກ, ອ້າຍ, ເອື້ອຍ, ນ້ອງ, ຍາດພີ່ນ້ອງ ແລະ ຜູ້ອື່ນ;

7. **ການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ** ໝາຍເຖິງ ການນໍາເອົາຊັບສິນທີ່ໄດ້ມາຈາກການສໍ້ລາດບັງຫຼວງ ໂດຍທາງກົງ ຫຼື ທາງອ້ອມ ໄປປ່ຽນຮູບ ຫຼື ປ່ຽນແປງທັງໝົດ ຫຼື ບາງສ່ວນ ໃຫ້ກາຍເປັນຊັບສິນທີ່ຖືກກົດໝາຍ ຫຼື ຮ່ວມຮຸ້ນໃນການລົງທຶນ;

8. **ມາດຕະການທາງກົດໝາຍ** ໝາຍເຖິງ ການສຶກສາອົບຮົມ, ການລົງວິໄນ, ການປັບໃໝ, ການໃຊ້ແທນຄ່າເສຍຫາຍທາງແພ່ງ ຫຼື ການລົງໂທດທາງອາຍາ;

9. **ຜູ້ໄດ້ຮັບມອບສິດ, ໜ້າທີ່ ໃດໜຶ່ງຈາກທາງການ** ໝາຍເຖິງ ນາຍບ້ານ, ຮອງນາຍບ້ານ, ຜູ້ທີ່ຮັບຜິດຊອບ ຕາມຕໍາແໜ່ງງານຂອງບ້ານ, ນັກທຸລະກິດ ຫຼື ຜູ້ປະກອບການ, ບຸກຄົນອື່ນ ທີ່ລັດມອບໝາຍໃຫ້ໄປປະຕິບັດວຽກງານການຈັດຕັ້ງຕ່າງໆ;

10. **ຜູ້ຖືກສືບສວນ-ສອບສວນ** ໝາຍເຖິງ ພະນັກງານ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ພົວພັນກັບຄະດີການສໍ້ລາດບັງຫຼວງ ເຊັ່ນ ຜູ້ຖືກສົງໄສ, ຜູ້ຖືກຫາ, ຈໍາເລີຍ ແລະ ຜູ້ອື່ນ.

### ມາດຕາ 4 (ໃໝ່) ນະໂຍບາຍຂອງລັດ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ

ລັດ ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການເຄື່ອນໄຫວວຽກງານຕ້ານການສໍ້ລາດບັງຫຼວງ ດ້ວຍການວາງນະໂຍບາຍ, ກົດໝາຍ, ປະກອບບຸກຄະລາກອນ, ສະໜອງງົບປະມານ, ພາຫະນະ, ວັດຖຸປະກອນ, ເຕັກນິກ, ເຕັກໂນໂລຊີ, ອາຄານ ແລະ ສະຖານທີ່ເຮັດວຽກ ເພື່ອຮັບປະກັນໃຫ້ການຈັດຕັ້ງປະຕິບັດວຽກງານດັ່ງກ່າວ ມີປະສິດທິພາບ ແລະ ປະສິດທິຜົນ.

ລັດ ເອົາໃຈໃສ່ ໂຄສະນາ, ສຶກສາອົບຮົມທົ່ວປວງຊົນ ດ້ວຍຫຼາຍຮູບການ ເພື່ອສ້າງຈິດສໍານຶກໃຫ້ສັງຄົມເຫັນໄດ້ຜົນຮ້າຍ ແລະ ໄພອັນຕະລາຍຂອງການສໍ້ລາດບັງຫຼວງ ທີ່ກໍ່ຄວາມເສຍຫາຍຕໍ່ຄວາມໝັ້ນຄົງຂອງຊາດ, ຄວາມສະຫງົບ, ຄວາມເປັນລະບຽບຮຽບຮ້ອຍຂອງສັງຄົມ ແລະ ລະບົບເສດຖະກິດຂອງຊາດ.

ລັດ ຊຸກຍູ້, ສົ່ງເສີມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທຸກພາກສ່ວນ ເຂົ້າຮ່ວມໃນການເຄື່ອນໄຫວວຽກງານຕ້ານການສໍ້ລາດບັງຫຼວງ.

### ມາດຕາ 5 (ປັບປຸງ) ຫຼັກການ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ

ວຽກງານຕ້ານການສໍ້ລາດບັງຫຼວງ ໃຫ້ປະຕິບັດຕາມຫຼັກການ ດັ່ງນີ້:

1. ສອດຄ່ອງກັບ ແນວທາງ ນະໂຍບາຍ, ລັດຖະທໍາມະນູນ, ກົດໝາຍ, ສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ;

2. ຮັບປະກັນການປົກປ້ອງສິດ ແລະ ຜົນປະໂຫຍດອັນຊອບທໍາຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ;

3. ດໍາເນີນການສະກັດກັ້ນ, ການກວດກາ, ການສືບສວນ-ສອບສວນ ແລະ ການນໍາໃຊ້ມາດຕະການທາງກົດໝາຍ ແລະ ການປະຕິບັດຄໍາຕັດສິນຂອງສານ ໃຫ້ຖືກຕ້ອງ, ທັນການ, ເຂັ້ມງວດ, ຍຸຕິທໍາ, ໂປ່ງໃສ ແລະ ສາມາດກວດສອບໄດ້;

4. ມີສ່ວນຮ່ວມຂອງອົງການຈັດຕັ້ງທຸກຂັ້ນ ລວມທັງສື່ມວນຊົນ ແລະ ພົນລະເມືອງ;

5. ຮັບປະກັນ ບໍ່ໃຫ້ມີການແຊກແຊງ, ຂັດຂວາງ ຫຼື ນາບຂູ່ ຈາກ ບຸກຄົນ ຫຼື ການຈັດຕັ້ງໃດໜຶ່ງ;

6. ໃຫ້ການຮ່ວມມື, ສ້າງເງື່ອນໄຂ ແລະ ອໍານວຍຄວາມສະດວກ ໃຫ້ແກ່ການກວດກາ ແລະ ສືບສວນ-ສອບສວນ ການສໍ້ລາດບັງຫຼວງ.

**ມາດຕາ 6 (ປັບປຸງ) ພັນທະໃນການຕ້ານການສໍ້ລາດບັງຫຼວງ**

ອົງການຈັດຕັ້ງຂອງ ພັກ, ລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ວິສາຫະກິດ, ສໍານັກງານຜູ້ຕາງໜ້າແຫ່ງ ສປປ ລາວ ປະຈໍາຢູ່ຕ່າງປະເທດ, ອົງການຈັດຕັ້ງສາກົນ, ສື່ມວນຊົນ ແລະ ພົນລະເມືອງ ມີພັນທະຮ່ວມມື ໃນການເຄື່ອນໄຫວສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ດ້ວຍການ ລາຍງານ, ອໍານວຍຄວາມສະດວກ, ສະໜອງຂໍ້ມູນ, ຫຼັກຖານ ຢ່າງຖືກຕ້ອງ, ຊັດເຈນ ແລະ ທັນການ ໃຫ້ແກ່ອົງການຕ້ານການສໍ້ລາດບັງຫຼວງ.

**ມາດຕາ 7 (ປັບປຸງ) ການປົກປ້ອງ**

ລັດ ປົກປ້ອງ ພະນັກງານ ທີ່ເຮັດວຽກງານຕ້ານການສໍ້ລາດບັງຫຼວງ, ເຈົ້າໜ້າທີ່ສືບສວນ-ສອບສວນຄະດີການສໍ້ລາດບັງຫຼວງ ລວມທັງ ຜູ້ເຂົ້າຮ່ວມໃນວຽກງານດັ່ງກ່າວ ເຊັ່ນ ຜູ້ລາຍງານ, ຜູ້ໃຫ້ ຂໍ້ມູນ ຂ່າວສານ, ຜູ້ຖືກເສຍຫາຍ, ພະຍານ, ຜູ້ຊ່ຽວຊານ ແລະ ຄອບຄົວຂອງຜູ້ກ່ຽວ ຈາກການແກ້ແຄ້ນ, ນາບຂູ່ຕໍ່ຊີວິດ, ສຸຂະພາບ, ອິດສະລະພາບ, ກຽດສັກສີ, ຊື່ສຽງ ແລະ ຊັບສິນ.

**ມາດຕາ 8 (ປັບປຸງ) ຂອບເຂດການນໍາໃຊ້ກົດໝາຍ**

ກົດໝາຍສະບັບນີ້ ນໍາໃຊ້ສໍາລັບ ພະນັກງານຂອງລັດ, ພະນັກງານວິສາຫະກິດ, ພະນັກງານຕ່າງປະເທດ, ພະນັກງານອົງການຈັດຕັ້ງສາກົນ, ບຸກຄົນອື່ນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ເຄື່ອນໄຫວ ແລະ ພົວພັນກັບການສໍ້ລາດບັງຫຼວງ ຢູ່ ສປປ ລາວ.

**ມາດຕາ 9 ການຮ່ວມມືສາກົນ**

ລັດ ສົ່ງເສີມການພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ ດ້ວຍການແລກປ່ຽນ ບົດຮຽນ, ຂໍ້ມູນ ຂ່າວສານ, ເຕັກນິກ, ເຕັກໂນໂລຊີ, ການຍົກລະດັບຄວາມຮູ້, ຄວາມສາມາດດ້ານວິຊາການ ເພື່ອພັດທະນາວຽກງານສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງໃຫ້ມີຄຸນນະພາບ, ເຂັ້ມແຂງ ແລະ ທັນສະໄໝ, ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

## ພາກທີ II
## ການສໍ້ລາດບັງຫຼວງ

### ມາດຕາ 10 (ປັບປຸງ) ການສໍ້ລາດບັງຫຼວງ

ການສໍ້ລາດບັງຫຼວງ ແມ່ນ ພຶດຕິກຳຂອງພະນັກງານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ, ໝູ່ຄູ່, ພັກພວກຂອງຕົນ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

### ມາດຕາ 11 ພຶດຕິກຳ ທີ່ເປັນການສໍ້ລາດບັງຫຼວງ

ພຶດຕິກຳ ທີ່ເປັນການສໍ້ລາດບັງຫຼວງ ມີ ດັ່ງນີ້:

1. ການຍັກຍອກຊັບຂອງລັດ ຫຼື ລວມໝູ່;
2. ການສໍ້ໂກງຊັບຂອງລັດ ຫຼື ລວມໝູ່;
3. ການໃຫ້ສິນບົນ;
4. ການຮັບສິນບົນ;
5. ການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ;
6. ການສວຍໃຊ້ຊັບຂອງລັດ ຫຼື ລວມໝູ່;
7. ການໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເກີນຂອບເຂດ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ;
8. ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ;
9. ການໂກງການປະມູນ ຫຼື ການສຳປະທານ;
10. ການປອມແປງເອກະສານ ຫຼື ການນຳໃຊ້ເອກະສານປອມ;
11. ການເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດແກ່ຕົນ;
12. ການກົດໜ່ວງ, ຖ່ວງດຶງ ເອກະສານ.

### ມາດຕາ 12 ການຍັກຍອກຊັບຂອງລັດ ຫຼື ລວມໝູ່

ການຍັກຍອກຊັບຂອງລັດ ຫຼື ລວມໝູ່ ແມ່ນ ການທີ່ພະນັກງານສວຍໃຊ້ຄວາມເຊື່ອໃຈ ເພື່ອລັກໂລບເອົາ, ຕັດຮອນເອົາ ຫຼື ສັບປ່ຽນເອົາຊັບຂອງລັດ ຫຼື ລວມໝູ່ ທີ່ຕົນໄດ້ຖືກມອບໝາຍໃຫ້ຮັກສາ, ນຳໃຊ້, ຂົນສົ່ງ, ກໍ່ສ້າງ, ສ້ອມແປງ ຫຼື ເຮັດວຽກໃດວຽກໜຶ່ງ.

### ມາດຕາ 13 ການສໍ້ໂກງຊັບຂອງລັດ ຫຼື ລວມໝູ່

ການສໍ້ໂກງຊັບຂອງລັດ ຫຼື ລວມໝູ່ ແມ່ນ ການທີ່ພະນັກງານໃຊ້ເລ່ຫຼ່ຽມ ຕົວະຍົວະ, ຫຼອກລວງ ດ້ວຍວິທີໃດກໍຕາມ ເພື່ອເຮັດໃຫ້ຜູ້ມີໜ້າທີ່ຮັບຜິດຊອບຊັບຂອງລັດ ຫຼື ລວມໝູ່ ຫຼື ຜູ້ອື່ນ ເອົາຊັບດັ່ງກ່າວໃຫ້ຕົນ.

### ມາດຕາ 14 ການໃຫ້ສິນບົນ

ການໃຫ້ສິນບົນ ແມ່ນ ການທີ່ພະນັກງານ ສະເໜີໃຫ້, ເອົາໃຫ້ ຫຼື ສັນຍາວ່າຈະໃຫ້ ເງິນ, ຊັບສິ່ງຂອງ ຫຼື ຜົນປະໂຫຍດໃດໜຶ່ງ ດ້ວຍຕົນເອງ ຫຼື ຜ່ານສື່ກາງ ແກ່ພະນັກງານໃດໜຶ່ງທີ່ກ່ຽວຂ້ອງ ໂດຍທາງກົງ ຫຼື ທາງອ້ອມ ເພື່ອໃຫ້ປະຕິບັດ, ເລືອກປະຕິບັດ ຫຼື ລະເວັ້ນ ການປະຕິບັດໜ້າທີ່ຂອງພະນັກງານ ເພື່ອຈຸດປະສົງ ແລະ ຜົນປະໂຫຍດຂອງຜູ້ໃຫ້ສິນບົນ.

**ມາດຕາ 15 ການຮັບສິນບົນ**

ການຮັບສິນບົນ ແມ່ນ ການທີ່ພະນັກງານ ຮັບເອົາ, ທວງເອົາ, ຂໍເອົາ ຫຼື ຕົກລົງຮັບເອົາເງິນ, ຊັບສິ່ງຂອງ ຫຼື ຜົນປະໂຫຍດໃດໜຶ່ງຈາກຜູ້ໃຫ້ສິນບົນ ໂດຍທາງກົງ ຫຼື ທາງອ້ອມ ແລ້ວປະຕິບັດ, ເລືອກປະຕິບັດ ຫຼື ລະເວັ້ນການປະຕິບັດໜ້າທີ່ຂອງຕົນ ຕາມຈຸດປະສົງ ແລະ ເພື່ອຜົນປະໂຫຍດຂອງຜູ້ໃຫ້ສິນບົນ.

**ມາດຕາ 16 ການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ**

ການສວຍໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ ແມ່ນ ການທີ່ພະນັກງານ ອີງໃສ່ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ຂອງຕົນ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ, ໝູ່ຄູ່, ພັກພວກຂອງຕົນ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

**ມາດຕາ 17 (ປັບປຸງ) ການສວຍໃຊ້ຊັບຂອງລັດ ຫຼື ລວມໝູ່**

ການສວຍໃຊ້ຊັບຂອງລັດ ຫຼື ລວມໝູ່ ແມ່ນ ການທີ່ພະນັກງານ ນຳໃຊ້ຊັບຂອງລັດ ຫຼື ລວມໝູ່ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ, ໝູ່ຄູ່, ພັກພວກຂອງຕົນ ຊຶ່ງໄດ້ກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ ຫຼື ລວມໝູ່.

**ມາດຕາ 18 ການໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເກີນຂອບເຂດ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ**

ການໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເກີນຂອບເຂດ ເພື່ອເອົາຊັບຂອງລັດ, ລວມໝູ່ ຫຼື ບຸກຄົນ ແມ່ນ ການທີ່ພະນັກງານ ໃຊ້ຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ເກີນທີ່ກົດໝາຍ ແລະ ລະບຽບການ ໄດ້ກຳນົດໄວ້ໂດຍເຈດຕະນາ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ, ໝູ່ຄູ່, ພັກພວກຂອງຕົນ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

**ມາດຕາ 19 (ປັບປຸງ) ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ**

ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ ແມ່ນ ການທີ່ພະນັກງານ ລັກໂລບ, ປອມແປງມາດຕະຖານເຕັກນິກໃນການສຳຫຼວດ, ອອກແບບ, ຄິດໄລ່ ແລະ ອື່ນໆ ຮ່ວມກັບເຈົ້າຂອງໂຄງການ, ບໍລິສັດຮັບເໝົາ ຫຼື ຜູ້ອື່ນທີ່ກ່ຽວຂ້ອງກັບກິດຈະການໃດໜຶ່ງ ເຊັ່ນ ການກໍ່ສ້າງ, ການສ້ອມແປງ, ການປະດັບປະດາຕົບແຕ່ງ, ການຕິດຕັ້ງ ແລະ ກິດຈະການອື່ນ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ, ໝູ່ຄູ່, ພັກພວກຂອງຕົນ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງ ລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

**ມາດຕາ 20 (ປັບປຸງ) ການໂກງການປະມູນ ຫຼື ການສຳປະທານ**

ການໂກງການປະມູນ ຫຼື ການສຳປະທານ ແມ່ນ ການທີ່ພະນັກງານ ຕົກລົງ, ສົມຮູ້ຮ່ວມຄິດ ກັບເຈົ້າຂອງໂຄງການ, ບໍລິສັດຮັບເໝົາ ແລະ ຜູ້ອື່ນທີ່ກ່ຽວຂ້ອງ ເພື່ອສ້າງເງື່ອນໄຂ ໃຫ້ຊະນະການປະມູນ ຫຼື ການສຳປະທານ ໃນກິດຈະການໃດໜຶ່ງຂອງລັດ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ, ໝູ່ຄູ່ ຫຼື ພັກພວກຂອງຕົນ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງ ລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

**ມາດຕາ 21 (ປັບປຸງ) ການປອມແປງເອກະສານ ຫຼື ການນຳໃຊ້ເອກະສານປອມ**

ການປອມແປງເອກະສານ ແມ່ນ ການທີ່ພະນັກງານ ປອມແປງລາຍເຊັນ, ຕາປະທັບ, ຕັດ ຫຼື ເພີ່ມຂໍ້ຄວາມ, ຕົວເລກໃດໜຶ່ງ ໃສ່ເນື້ອໃນເອກະສານ.

ການນຳໃຊ້ເອກະສານປອມ ແມ່ນ ການທີ່ພະນັກງານ ນຳໃຊ້ເອກະສານທີ່ຮູ້ວ່າເປັນ ເອກະສານປອມ, ເອກະສານນຳໃຊ້ຊໍ້າຊ້ອນ ຫຼື ເອກະສານໝົດອາຍຸການນຳໃຊ້ ແຕ່ນຳໄປໃຊ້ ເພື່ອຫາຜົນປະໂຫຍດແກ່ຕົນ, ຄອບຄົວ, ຍາດພີ່ນ້ອງ, ໝູ່ຄູ່ ຫຼື ພັກພວກຂອງຕົນ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງ ລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

**ມາດຕາ 22 (ປັບປຸງ) ການເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດແກ່ຕົນ**

ການເປີດເຜີຍຄວາມລັບ ເພື່ອຫາຜົນປະໂຫຍດແກ່ຕົນ ແມ່ນ ການທີ່ພະນັກງານ ເປີດເຜີຍເອກະສານ ຫຼື ຂໍ້ມູນລັບ, ການຕົກລົງ ຂອງລັດ ຫຼື ທາງລັດຖະການ ທີ່ລັດບໍ່ອະນຸຍາດໃຫ້ເປີດເຜີຍ.

**ມາດຕາ 23 ການກົດໜ່ວງ, ຖ່ວງດຶງ ເອກະສານ**

ການກົດໜ່ວງ, ຖ່ວງດຶງ ເອກະສານ ແມ່ນ ການທີ່ພະນັກງານ ກັກ, ໜ່ວງໜ່ຽວ, ແກ່ຍາວເວລາໃນການແກ້ໄຂເອກະສານທາງການ ໂດຍຜູ້ມີຖານະຕຳແໜ່ງ, ສິດອຳນາດ, ໜ້າທີ່ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງ ລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ.

## ພາກທີ III
## ການຕ້ານການສໍ້ລາດບັງຫຼວງ
### ໝວດທີ 1
### ການສະກັດກັ້ນການສໍ້ລາດບັງຫຼວງ

**ມາດຕາ 24 (ປັບປຸງ) ການສະກັດກັ້ນການສໍ້ລາດບັງຫຼວງ**

ການສະກັດກັ້ນການສໍ້ລາດບັງຫຼວງ ແມ່ນ ການຈຳກັດ, ປ້ອງກັນ ບໍ່ໃຫ້ມີພຶດຕິກຳທີ່ເປັນການສໍ້ລາດບັງຫຼວງເກີດຂຶ້ນ ຢູ່ໃນອົງການຈັດຕັ້ງ ພັກ, ລັດ, ການເມືອງ ແລະ ສັງຄົມ ດ້ວຍການເປັນແບບຢ່າງທີ່ດີຂອງພະນັກງານ, ການໂຄສະນາ ເຜີຍແຜ່, ການອອກນິຕິກຳ ແລະ ການແຈ້ງຊັບສິນ.

**ມາດຕາ 25 (ປັບປຸງ) ການເປັນແບບຢ່າງທີ່ດີຂອງພະນັກງານ**

ພະນັກງານ ຕ້ອງເປັນແບບຢ່າງທີ່ດີໃນການປະຕິບັດກົດໝາຍຢ່າງເຂັ້ມງວດ, ມີ ຈັນຍາບັນ, ຈັນຍາທຳ, ດຳລົງຊີວິດ ສັດຊື່ບໍລິສຸດ, ໂປ່ງໃສ ຂາວສະອາດ, ປະຢັດມັດທະຍັດ, ບໍ່ຟູມເຟືອຍ ແລະ ບໍ່ສໍ້ລາດບັງຫຼວງ.

**ມາດຕາ 26 (ໃໝ່) ການໂຄສະນາ ເຜີຍແຜ່**

ອົງການຕ້ານການສໍ້ລາດບັງຫຼວງແຕ່ລະຂັ້ນ ເປັນເຈົ້າການໃນການໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ແຜນຍຸດທະສາດ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ ໃຫ້ພະນັກງານ, ທະຫານ, ຕຳຫຼວດ, ພົນລະເມືອງ ມີສະຕິໃນການເຄົາລົບ ແລະ ປະຕິບັດກົດໝາຍ ໂດຍຜ່ານຮູບການ ຈັດກອງປະຊຸມ, ຈັດຝຶກອົບຮົມ, ຈັດສຳມະນາ, ຜ່ານສື່ສິ່ງພິມ, ສື່ເອເລັກໂຕຣນິກ, ຜະລິດຕະພັນສື່ມວນຊົນ ແລະ ກຳນົດເຂົ້າ

ໃນການຮຽນ-ການສອນໃນລະດັບຕ່າງໆ ເພື່ອປູກຈິດສຳນຶກ ໃຫ້ຮັບຮູ້, ເຂົ້າໃຈຜົນຮ້າຍ ແລະ ໄພອັນຕະລາຍຂອງການສໍ້ລາດບັງຫຼວງ.

**ມາດຕາ 27 (ໃໝ່) ການອອກນິຕິກຳ**

ກະຊວງ, ອົງການ ແລະ ອົງການປົກຄອງທ້ອງຖິ່ນ ເປັນເຈົ້າການໃນການອອກນິຕິກຳ ໃຫ້ຮັດກຸມ, ເປັນລະບົບ, ຄົບຊຸດ ເພື່ອປັບປຸງ ກົນໄກບໍລິຫານ, ການຄຸ້ມຄອງພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ ໃຫ້ມີປະສິດທິພາບ ແລະ ປະສິດທິຜົນ ລວມທັງການປະຕິບັດນະໂຍບາຍ ຕໍ່ພະນັກງານ-ລັດຖະກອນ, ທະຫານ, ຕຳຫຼວດ, ເຈົ້າໜ້າທີ່ ແຕ່ລະຂັ້ນ ໃຫ້ຈະແຈ້ງ ແລະ ຮັບປະກັນການແກ້ໄຂຊີວິດການເປັນຢູ່ຢ່າງເໝາະສົມ ເພື່ອສະກັດກັ້ນການສໍ້ລາດບັງຫຼວງ.

**ມາດຕາ 28 (ປັບປຸງ) ການແຈ້ງຊັບສິນ**

ການແຈ້ງຊັບສິນ ແມ່ນ ການແຈ້ງລາຍລະອຽດເປັນລາຍລັກອັກສອນ ກ່ຽວກັບປະຫວັດຫຍໍ້, ການພົວພັນໃນຄອບຄົວ, ປະເພດຊັບສິນ ແລະ ໜີ້ສິນຕາມເອກະສານການແຈ້ງຊັບສິນ ຂອງອົງການຕ້ານການສໍ້ລາດບັງຫຼວງ ກຳນົດ.

ພະນັກງານຂອງລັດ ກ່ອນ ແລະ ຫຼັງ ຮັບຕຳແໜ່ງ, ໜ້າທີ່, ພະນັກງານກຽມຮັບອຸດໜູນບຳນານ, ບຳເນັດ, ຍົກຍ້າຍບ່ອນປະຈຳການ ແລະ ຜູ້ສະໝັກຮັບເລືອກຕັ້ງເປັນສະມາຊິກ ສະພາແຫ່ງຊາດ ຫຼື ສະພາປະຊາຊົນຂັ້ນແຂວງ ຕ້ອງແຈ້ງຊັບສິນຂອງຕົນ ລວມທັງບຸກຄົນອື່ນທີ່ຢູ່ໃນການຄຸ້ມຄອງຂອງຕົນ ຢ່າງຄົບຖ້ວນ ແລະ ມີຄວາມຮັບຜິດຊອບຕໍ່ເນື້ອໃນການແຈ້ງຊັບສິນນັ້ນ ຕາມກົດໝາຍ.

ສຳລັບຂັ້ນຕອນ, ວິທີການ ແລະ ມາດຕະການ ການແຈ້ງຊັບສິນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ໝວດທີ 2
## ການກວດກາການສໍ້ລາດບັງຫຼວງ

**ມາດຕາ 29 (ປັບປຸງ) ສາເຫດທີ່ພາໃຫ້ມີການກວດກາ**

ສາເຫດທີ່ພາໃຫ້ມີການກວດກາການສໍ້ລາດບັງຫຼວງ ມີ ດັ່ງນີ້:

1. ພົບເຫັນຂໍ້ມູນ, ຫຼັກຖານທີ່ໜ້າເຊື່ອຖືໄດ້ ກ່ຽວກັບພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ;
2. ມີ ແຫຼ່ງຂ່າວ, ແຈ້ງການ, ແຈ້ງຄວາມ, ການລາຍງານ, ການສະເໜີ ຫຼື ການຮ້ອງຟ້ອງ;
3. ມີປາກົດການຮັ່ງມີຜິດປົກກະຕິ ຂອງພະນັກງານ ຫຼື ບຸກຄົນອື່ນທີ່ຢູ່ໃນການຄຸ້ມຄອງຂອງຕົນ;
4. ມີຂໍ້ມູນກ່ຽວກັບການຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ.

**ມາດຕາ 30 (ປັບປຸງ) ຂັ້ນຕອນການດຳເນີນການກວດກາ**

ການດຳເນີນການກວດກາການສໍ້ລາດບັງຫຼວງ ໃຫ້ປະຕິບັດຕາມຂັ້ນຕອນ ດັ່ງນີ້:

1. ຄົ້ນຄວ້າ ແຫຼ່ງຂ່າວ, ແຈ້ງການ, ແຈ້ງຄວາມ, ການລາຍງານ, ການສະເໜີ ຫຼື ການຮ້ອງຟ້ອງ ແລະ ລົງເກັບກຳຂໍ້ມູນ ຖ້າເຫັນວ່າມີຄວາມຈຳເປັນ;

2. ແຕ່ງຕັ້ງ ຄະນະກວດກາ ຫຼື ຄະນະກວດກາສະເພາະກິດ;

3. ກະກຽມ ແລະ ສ້າງແຜນການລົງກວດກາຕົວຈິງ ໂດຍປະສານສົມທົບກັບຂະແໜງການອື່ນ ແລະ ອົງການປົກຄອງທ້ອງຖິ່ນທີ່ກ່ຽວຂ້ອງ;

4. ກວດກາເອກະສານ ແລະ ຊັບສິນຂອງ ພະນັກງານທີ່ກ່ຽວຂ້ອງ, ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ພົວພັນກັບການສໍ້ລາດບັງຫຼວງ ເປັນຕົ້ນ ກວດກາການເງິນ-ການບັນຊີ, ລາຍຮັບ-ລາຍຈ່າຍງົບປະມານຂອງລັດ, ການໃຊ້ຈ່າຍທຶນຊ່ວຍເຫຼືອ ແລະ ທຶນກູ້ຢືມ;

5. ເຊີນຜູ້ຕາງໜ້າ ນິຕິບຸກຄົນ, ການຈັດຕັ້ງ, ພະນັກງານ ຫຼື ບຸກຄົນ ທີ່ກ່ຽວຂ້ອງ ມາອະທິບາຍ, ໃຫ້ຄວາມກະຈ່າງແຈ້ງ;

6. ສະຫຼຸບ, ຕີລາຄາ ແລະ ລາຍງານ ຜົນການກວດກາ.

**ມາດຕາ 31 (ປັບປຸງ) ກຳນົດເວລາໃນການດຳເນີນການກວດກາ**

ກຳນົດເວລາໃນການດຳເນີນການກວດກາ ຂອງອົງການຕ້ານການສໍ້ລາດບັງຫຼວງ ມີ ດັ່ງນີ້:

1. ອົງການຕ້ານການສໍ້ລາດບັງຫຼວງສູນກາງ ດຳເນີນການກວດກາແຕ່ລະເປົ້າໝາຍບໍ່ໃຫ້ເກີນ ເກົ້າສິບວັນ ນັບແຕ່ວັນດຳເນີນການກວດກາເປັນຕົ້ນໄປ. ຖ້າການກວດກາຫາກບໍ່ສຳເລັດ ກໍສາມາດດຳເນີນຕໍ່ໄດ້ອີກ ສາມສິບວັນ, ໃນກໍລະນີມີຄວາມຫຍຸ້ງຍາກເປັນພິເສດ ຊຶ່ງພົວພັນເຖິງຫຼາຍຂະແໜງການ ແລະ/ຫຼື ອົງການປົກຄອງທ້ອງຖິ່ນ ກໍສາມາດຕໍ່ເວລາໄດ້ອີກ ແຕ່ທັງໝົດບໍ່ໃຫ້ເກີນ ຮ້ອຍແປດສິບວັນ;

2. ອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ ແລະ ອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ດຳເນີນການກວດກາແຕ່ລະເປົ້າໝາຍບໍ່ໃຫ້ເກີນ ຫົກສິບວັນ ນັບແຕ່ວັນດຳເນີນການກວດກາເປັນຕົ້ນໄປ, ຖ້າການກວດກາຫາກບໍ່ສຳເລັດ ກໍສາມາດຕໍ່ເວລາໄດ້ອີກ ສາມສິບວັນ;

3. ອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ ດຳເນີນການກວດກາແຕ່ລະເປົ້າໝາຍບໍ່ໃຫ້ເກີນ ສາມສິບວັນ ນັບແຕ່ວັນດຳເນີນການກວດກາເປັນຕົ້ນໄປ, ຖ້າການກວດກາຫາກບໍ່ສຳເລັດ ກໍສາມາດຕໍ່ເວລາໄດ້ອີກ ສິບຫ້າວັນ.

**ມາດຕາ 32 (ປັບປຸງ) ການຕົກລົງກ່ຽວກັບຜົນການກວດກາ**

ຜ່ານການກວດກາ ຖ້າຫາກມີຫຼັກຖານ ອົງການຕ້ານການສໍ້ລາດບັງຫຼວງ ມີສິດຕົກລົງ ດັ່ງນີ້:

1. ໃຫ້ອົງການທີ່ກ່ຽວຂ້ອງ ສຶກສາອົບຮົມ ຖ້າຫາກເປັນ ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ ແລະ ການໂກງການປະມູນ ຫຼື ການສໍາປະທານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 89 ຂອງກົດໝາຍສະບັບນີ້;

2. ໃຫ້ອົງການທີ່ກ່ຽວຂ້ອງ ລົງວິໄນ ຖ້າຫາກເປັນ ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ ແລະ ການໂກງການປະມູນ ຫຼື ການສໍາປະທານ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 90 ຂອງກົດໝາຍສະບັບນີ້;

3. ອອກຄຳສັ່ງເປີດການສືບສວນ-ສອບສວນ ຖ້າຫາກເຫັນວ່າເປັນການກະທຳຜິດທາງອາຍາ.

**ມາດຕາ 33 (ປັບປຸງ) ການປະຕິບັດການຕົກລົງຂອງອົງການຕ້ານການສໍ້ລາດບັງຫຼວງ**

ອົງການທີ່ໄດ້ຮັບການຕົກລົງຂອງອົງການຕ້ານການສໍ້ລາດບັງຫຼວງ ໃຫ້ດຳເນີນການແກ້ໄຂ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 32 ຂອງກົດໝາຍສະບັບນີ້ ນັບແຕ່ວັນໄດ້ຮັບການຕົກລົງເປັນຕົ້ນໄປ; ຖ້າຫາກບໍ່ປະຕິບັດຕາມການຕົກລົງແລ້ວ ອົງການຕ້ານການສໍ້ລາດບັງຫຼວງ ກໍມີສິດສະເໜີໃຫ້ຂັ້ນເທິງທີ່ກ່ຽວຂ້ອງຖັດນັ້ນ ເປັນຜູ້ແກ້ໄຂ; ໃນກໍລະນີອົງການທີ່ໄດ້ຮັບຄຳສະເໜີຈາກອົງການຕ້ານການສໍ້ລາດບັງຫຼວງ ຫາກບໍ່ປະຕິບັດຕາມຄຳສະເໜີ ໂດຍບໍ່ມີເຫດຜົນ ຈະຖືວ່າເປັນການລະເມີດກົດໝາຍ.

## ໝວດທີ 3
## ການສືບສວນ-ສອບສວນຄະດີການສໍ້ລາດບັງຫຼວງ

**ມາດຕາ 34 (ປັບປຸງ) ສາເຫດທີ່ພາໃຫ້ມີການເປີດການສືບສວນ-ສອບສວນ**

ສາເຫດທີ່ພາໃຫ້ມີການເປີດການສືບສວນ-ສອບສວນ ຄະດີການສໍ້ລາດບັງຫຼວງ ມີ ດັ່ງນີ້:

1. ມີຄໍາຮ້ອງຟ້ອງ ຫຼື ການແຈ້ງຄວາມ ຂອງບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບພຶດຕິກໍາ ຂອງພະນັກງານ ທີ່ເປັນການສໍ້ລາດບັງຫຼວງ;
2. ມີການເຂົ້າ ລາຍງານ, ມອບຕົວ ຂອງຜູ້ກະທໍາຜິດ;
3. ມີການພົບເຫັນຂໍ້ມູນ, ຫຼັກຖານໜັກແໜ້ນ ທີ່ຢັ້ງຢືນວ່າເປັນການສໍ້ລາດບັງຫຼວງ;
4. ມີຂໍ້ມູນກ່ຽວກັບການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ;
5. ມີອົງປະກອບຂອງການກະທໍາຜິດທາງອາຍາຢ່າງຄົບຖ້ວນ.

**ມາດຕາ 35 ຂັ້ນຕອນ ການສືບສວນ-ສອບສວນ**

ຂັ້ນຕອນ ການສືບສວນ-ສອບສວນ ຄະດີການສໍ້ລາດບັງຫຼວງ ມີ ດັ່ງນີ້:

1. ອອກຄໍາສັ່ງເປີດການສືບສວນ-ສອບສວນ;
2. ດໍາເນີນການສືບສວນ-ສອບສວນ;
3. ສະຫຼຸບ ແລະ ປະກອບສໍານວນຄະດີ ສົ່ງໃຫ້ອົງການໄອຍະການປະຊາຊົນ.

**ມາດຕາ 36 (ປັບປຸງ) ການອອກຄໍາສັ່ງເປີດການສືບສວນ-ສອບສວນ**

ໃນກໍລະນີມີ ຂໍ້ມູນ, ຫຼັກຖານໜັກແໜ້ນກ່ຽວກັບການກະທໍາຜິດ ໃນສະຖານການສໍ້ລາດບັງຫຼວງ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ຕ້ອງອອກຄໍາສັ່ງ ເປີດການສືບສວນ-ສອບສວນ ໃນຂອບເຂດສິດອໍານາດຂອງຕົນ. ເນື້ອໃນຂອງຄໍາສັ່ງນັ້ນ ຕ້ອງບອກ ວັນ, ເວລາ ແລະ ສະຖານທີ່ອອກຄໍາສັ່ງ, ຊື່ ແລະ ນາມສະກຸນ, ໜ້າທີ່ຕໍາແໜ່ງຂອງຜູ້ອອກຄໍາສັ່ງ ແລະ ເຈົ້າໜ້າທີ່ສືບສວນ-ສອບສວນ, ເຫດຜົນ ແລະ ພື້ນຖານ ທີ່ພາໃຫ້ເປີດການສືບສວນ-ສອບສວນ, ສະຖານການກະທໍາຜິດ ກ່ຽວກັບການສໍ້ລາດບັງຫຼວງ ຕາມມາດຕາທີ່ກ່ຽວຂ້ອງ ຊຶ່ງໄດ້ກໍານົດໄວ້ໃນປະມວນກົດໝາຍອາຍາ.

ໃນກໍລະນີບໍ່ມີຂໍ້ມູນ, ຫຼັກຖານໜັກແໜ້ນໃຫ້ແກ່ການເປີດການສືບສວນ-ສອບສວນ ຫຼື ບໍ່ມີສາເຫດທີ່ພາໃຫ້ມີການເປີດການສືບສວນ-ສອບສວນ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 34 ຂອງກົດໝາຍສະບັບນີ້ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ຕ້ອງອອກຄໍາສັ່ງບໍ່ເປີດການສືບສວນ-ສອບສວນ ພ້ອມທັງແຈ້ງຄໍາສັ່ງດັ່ງກ່າວໃຫ້ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ໄດ້ຮ້ອງຟ້ອງ ຫຼື ແຈ້ງຄວາມນັ້ນຊາບ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງທີ່ກ່ຽວຂ້ອງ ສາມາດຂໍອຸທອນຄໍາສັ່ງບໍ່ເປີດການສືບສວນ-ສອບສວນຂອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ຕໍ່ອົງການຕ້ານການສໍ້ລາດບັງຫຼວງຂັ້ນເທິງຖັດນັ້ນ ພາຍໃນເວລາເຈັດວັນ ລັດຖະການ ນັບແຕ່ວັນຮັບຊາບຄໍາສັ່ງນັ້ນ ເປັນຕົ້ນໄປ.

**ມາດຕາ 37 (ປັບປຸງ) ການດໍາເນີນການສືບສວນ-ສອບສວນ**

ການດໍາເນີນການສືບສວນ-ສອບສວນ ຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນກັບການສໍ້ລາດລາດບັງຫຼວງ ຕ້ອງນໍາໃຊ້ວິທີການສືບສວນ-ສອບສວນ ແລະ ມາດຕະການສະກັດກັ້ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການດໍາເນີນຄະດີອາຍາ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ພົວພັນກັບພະນັກງານ ຊຶ່ງມີພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ ກໍໃຫ້ດຳເນີນການສືບສວນ-ສອບສວນ ໄປພ້ອມດຽວກັນ.

**ມາດຕາ 38 ກຳນົດເວລາໃນການດຳເນີນການສືບສວນ-ສອບສວນ**

ອົງການຕ້ານການສໍ້ລາດບັງຫຼວງ ຕ້ອງດຳເນີນການສືບສວນ-ສອບສວນ, ສະຫຼຸບຜົນການສືບສວນ-ສອບສວນ ແລະ ປະກອບສຳນວນຄະດີ ພ້ອມດ້ວຍຂອງກາງ ສົ່ງໃຫ້ອົງການໄອຍະການປະຊາຊົນ ພາຍໃນເວລາ ສາມເດືອນ ນັບແຕ່ວັນອອກຄຳສັ່ງເປີດການສືບສວນ-ສອບສວນ ເປັນຕົ້ນໄປ.

ຖ້າເຫັນວ່າ ມີຄວາມຈຳເປັນ ຈະຕ້ອງໄດ້ສືບຕໍ່ດຳເນີນການສືບສວນ-ສອບສວນ ອາດຕໍ່ເວລາໃນການສືບສວນ-ສອບສວນ ໄດ້ອີກ ເທື່ອລະສາມເດືອນ ແຕ່ລວມທັງໝົດບໍ່ໃຫ້ເກີນ ໜຶ່ງປີ. ການສະເໜີຂໍຕໍ່ກຳນົດເວລາແຕ່ລະເທື່ອ ໃຫ້ດຳເນີນພາຍໃນເວລາ ສິບຫ້າວັນ ກ່ອນໝົດກຳນົດເວລາສືບສວນ-ສອບສວນ.

**ມາດຕາ 39 (ປັບປຸງ) ການສະຫຼຸບ ແລະ ປະກອບສຳນວນຄະດີ ສົ່ງໃຫ້ອົງການໄອຍະການປະຊາຊົນ**

ພາຍຫຼັງສິ້ນສຸດການສືບສວນ-ສອບສວນແລ້ວ ຖ້າຫາກມີ ຂໍ້ມູນ, ຫຼັກຖານໜັກແໜ້ນວ່າການກະທຳຜິດນັ້ນ ເປັນການສໍ້ລາດບັງຫຼວງ ອົງການຕ້ານການສໍ້ລາດບັງຫຼວງ ຕ້ອງສະຫຼຸບ ແລະ ປະກອບສຳນວນຄະດີ ພ້ອມດ້ວຍຂອງກາງ ແລະ ລາຍຊື່ຜູ້ຖືກຫາ ສົ່ງໃຫ້ອົງການໄອຍະການປະຊາຊົນ ພິຈາລະນາຕາມກົດໝາຍ.

**ມາດຕາ 40 (ປັບປຸງ) ການຕິດຕາມ ແລະ ຂໍອຸທອນ ຂອງອົງການຕ້ານການສໍ້ລາດບັງຫຼວງ**

ໃນກໍລະນີຫົວໜ້າອົງການໄອຍະການປະຊາຊົນ ຫາກບໍ່ສັ່ງຟ້ອງຜູ້ຖືກຫາຂຶ້ນສານ ພາຍໃນເວລາຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາແລ້ວ ອົງການຕ້ານການສໍ້ລາດບັງຫຼວງ ມີສິດຕິດຕາມ ແລະ ຂໍອຸທອນ ຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນ ເປັນຕົ້ນ ຄຳສັ່ງບໍ່ສັ່ງຟ້ອງ ໄປຍັງອົງການໄອຍະການປະຊາຊົນຂັ້ນເທິງ ເພື່ອພິຈາລະນາ.

**ມາດຕາ 41 (ປັບປຸງ) ເຈົ້າໜ້າທີ່ສືບສວນ-ສອບສວນ**

ເຈົ້າໜ້າທີ່ສືບສວນ-ສອບສວນຄະດີການສໍ້ລາດບັງຫຼວງ ແມ່ນ ພະນັກງານ ສັງກັດຢູ່ອົງການຕ້ານການສໍ້ລາດບັງຫຼວງແຕ່ລະຂັ້ນ ຊຶ່ງໄດ້ຮັບການແຕ່ງຕັ້ງຈາກຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ໂດຍມີ ສິດ ແລະ ໜ້າທີ່ສືບສວນ-ສອບສວນຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ ຕາມກົດໝາຍສະບັບນີ້ ແລະ ກົດໝາຍວ່າດ້ວຍການດຳເນີນຄະດີອາຍາ.

**ມາດຕາ 42 (ໃໝ່) ມາດຕະຖານຂອງເຈົ້າໜ້າທີ່ສືບສວນ-ສອບສວນ**

ເຈົ້າໜ້າທີ່ສືບສວນ-ສອບສວນຄະດີການສໍ້ລາດບັງຫຼວງ ມີມາດຕະຖານ ດັ່ງນີ້:

1. ປະຕິບັດກົດໝາຍຢ່າງເຂັ້ມງວດ, ມີຄຸນສົມບັດສິນທຳປະຕິວັດ, ສັດຊື່ບໍລິສຸດ, ທ່ຽງທຳ, ມີຈັນຍາບັນ, ຈັນຍາທຳ, ໂປ່ງໃສ;
2. ມີຄວາມຍຸຕິທຳ, ເບິ່ງບັນຫາເລິກເຊິ່ງ, ຮອບດ້ານ, ມີວິທະຍາສາດ, ພາວະວິໄສ, ມີວິໄສທັດ, ບໍ່ລຳອຽງ, ບໍ່ອະຄະຕິ, ໄຈ້ແຍກຂໍ້ມູນຢ່າງຖືກຕ້ອງ ຊັດເຈນ, ກ້າຫານ ແລະ ເດັດຂາດ ໃນການດຳເນີນການສືບສວນ-ສອບສວນ ຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ;
3. ມີ ຄວາມຮູ້, ຄວາມສາມາດ, ວິຊາສະເພາະກົດໝາຍຊັ້ນສູງຂຶ້ນໄປ ແລະ ໄດ້ຜ່ານຫຼັກສູດກ່ຽວກັບວຽກງານສືບສວນ-ສອບສວນ;
4. ຮັກສາຄວາມລັບ ໃນການປະຕິບັດໜ້າທີ່ການສືບສວນ-ສອບສວນ;

5. ບໍ່ເຄີຍຖືກລົງວິໄນ ຫຼື ບໍ່ເຄີຍຖືກສານຕັດສິນລົງໂທດ ຍ້ອນການກະທຳຜິດ ໂດຍເຈດຕະນາ;

6. ມີສຸຂະພາບດີ.

**ມາດຕາ 43 (ປັບປຸງ) ສິດ ແລະ ໜ້າທີ່ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ**

ເຈົ້າໜ້າທີ່ສືບສວນ-ສອບສວນຄະດີການສໍ້ລາດບັງຫຼວງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ຮັບ ແລະ ບັນທຶກການແຈ້ງຄວາມ, ການສະເໜີ, ການລາຍງານ ຫຼື ການຮ້ອງຟ້ອງ ກ່ຽວກັບການສໍ້ລາດບັງຫຼວງ;

2. ສະເໜີຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ອອກຄຳສັ່ງເປີດການສືບສວນ-ສອບສວນ;

3. ສະເໜີອອກ ໝາຍຮຽກ, ໝາຍເຊີນ, ຄຳສັ່ງພາຕົວ, ຄຳສັ່ງກັກຕົວ, ຄຳສັ່ງຄຸມຕົວຢູ່ກັບທີ່, ຄຳສັ່ງ ຍຶດ ຫຼື ອາຍັດຊັບ, ຄຳສັ່ງປ່ອຍຕົວຜູ້ຖືກສົງໄສ, ຄຳສັ່ງ ໂຈະ ຫຼື ຊັດມ້ຽນຄະດີ;

4. ດຳເນີນການສືບສວນ-ສອບສວນ ຄະດີການຕ້ານການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ ຕາມກົດໝາຍສະບັບນີ້, ປະມວນກົດໝາຍອາຍາ ແລະ ການນຳໃຊ້ມາດຕະການສະກັດກັ້ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍວ່າດ້ວຍການດຳເນີນຄະດີອາຍາ;

5. ລົງກວດກາ, ເກັບກຳ, ທ້ອນໂຮມ ຂໍ້ມູນຫຼັກຖານ, ຕີລາຄາ ແລະ ສະເໜີພິສູດຫຼັກຖານກ່ຽວກັບການກະທຳຜິດ ໃນສະຖານການສໍ້ລາດບັງຫຼວງ;

6. ສະເໜີໃຫ້ພາກສ່ວນທີ່ກ່ຽວຂ້ອງ ອອກຄຳສັ່ງຢຸດເຊົາການເຄື່ອນໄຫວວຽກງານ ຫຼື ໂຈະການເລື່ອນຊັ້ນ, ຕຳແໜ່ງ ຜູ້ຖືກສືບສວນ-ສອບສວນ ທີ່ເຫັນວ່າມີຂໍ້ມູນ, ຫຼັກຖານໜັກແໜ້ນທີ່ເປັນການກະທຳຜິດໃນສະຖານການສໍ້ລາດບັງຫຼວງ;

7. ປະຕິບັດຕາມຄຳສັ່ງ ຍຶດ ຫຼື ອາຍັດຊັບ ແລະ ເກັບຮັກສາຂອງກາງຄະດີ ທີ່ພົວພັນກັບການສໍ້ລາດບັງຫຼວງ;

8. ຊອກຫາ, ພາຕົວຜູ້ຖືກຫາ, ຄົ້ນຕົວບຸກຄົນ ແລະ ກວດຄົ້ນເຄຫະສະຖານ, ຍານພາຫະນະຂອງຜູ້ກ່ຽວທີ່ພົວພັນກັບການສໍ້ລາດບັງຫຼວງ;

9. ແຈ້ງ ສິດ ແລະ ພັນທະ ຕໍ່ຜູ້ຖືກສົງໄສ, ຜູ້ຖືກຫາ, ຜູ້ຖືກເສຍຫາຍ, ພະຍານ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ ໃນຄະດີການສໍ້ລາດບັງຫຼວງ ເວລາດຳເນີນການສືບສວນ-ສອບສວນ;

10. ຄົ້ນຫາ, ເກັບກຳປະຫວັດຂອງຜູ້ຖືກສົງໄສ, ຜູ້ຖືກຫາ, ຜູ້ຖືກເສຍຫາຍ ທີ່ພົວພັນກັບການສໍ້ລາດບັງຫຼວງ;

11. ພົວພັນ, ປະສານສົມທົບກັບພາກສ່ວນອື່ນທີ່ກ່ຽວຂ້ອງ ຢູ່ສູນກາງ ແລະ ທ້ອງຖິ່ນ ໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ;

12. ສະຫຼຸບ ແລະ ລາຍງານຜົນການສືບສວນ-ສອບສວນ ຕໍ່ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ ແລະ ຕາມການມອບໝາຍຂອງຂັ້ນເທິງ.

**ມາດຕາ 44 (ໃໝ່) ສິດຂອງຜູ້ຖືກສືບສວນ-ສອບສວນ**

ຜູ້ຖືກສືບສວນ-ສອບສວນ ຕາມແຕ່ລະກໍລະນີ ມີ ສິດ ດັ່ງນີ້:

1. ຮັບຊາບ ແລະ ແກ້ ຂໍ້ກ່າວຫາ;

2. ໄດ້ຮັບການອະທິບາຍ ກ່ຽວກັບ ສິດ ແລະ ພັນທະ ຂອງຕົນໃນການຕໍ່ສູ້ຄະດີ;

3. ໃຫ້ການ ແລະ ສະເໜີຫຼັກຖານ;

4. ສະເໜີປະກັນຕົວ ແລະ ຍື່ນຄຳຮ້ອງຂໍ ທີ່ກ່ຽວຂ້ອງ;

5. ໄດ້ຮັບເອກະສານ ກ່ຽວກັບການເປີດການສືບສວນ-ສອບສວນ, ບົດບັນທຶກຄໍາໃຫ້ການຂອງຕົນ, ຄໍາສັ່ງກ່ຽວກັບການນໍາໃຊ້, ປ່ຽນແປງ ຫຼື ລົບລ້າງ ມາດຕະການສະກັດກັ້ນ, ຄໍາສັ່ງໂຈະ, ບົດສະຫຼຸບຜົນການສືບສວນ-ສອບສວນ;

6. ເອົາ ແລະ ພົບ ທະນາຍຄວາມ ຫຼື ຜູ້ປົກປ້ອງອື່ນ ໃນການຕໍ່ສູ້ຄະດີ;

7. ຄັດຄ້ານຕົວ ເຈົ້າໜ້າທີ່ສືບສວນ-ສອບສວນ ທີ່ເຫັນວ່າມີຂໍ້ຂັດແຍ່ງ ຫຼື ມີອະຄະຕິຕໍ່ຕົນມາກ່ອນ;

8. ຮ້ອງຟ້ອງຕໍ່ການກະທໍາຂອງ ພະນັກງານທີ່ເຮັດວຽກງານຕ້ານການສໍ້ລາດບັງຫຼວງ ຫຼື ເຈົ້າໜ້າທີ່ສືບສວນ-ສອບສວນ ທີ່ເຫັນວ່າບໍ່ຖືກຕ້ອງ;

9. ນໍາໃຊ້ສິດອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 45 (ໃໝ່) ພັນທະຂອງຜູ້ຖືກສືບສວນ-ສອບສວນ**

ຜູ້ຖືກສືບສວນ-ສອບສວນ ຕາມແຕ່ລະກໍລະນີ ມີພັນທະ ດັ່ງນີ້:

1. ເຂົ້າມາສະເໜີຕົວ ຕາມ ໝາຍຮຽກ, ໝາຍເຊີນ ແລະ ຄໍາສັ່ງ ຂອງເຈົ້າໜ້າທີ່ສືບສວນ-ສອບສວນ ຄະດີການສໍ້ລາດບັງຫຼວງ;

2. ປະຕິບັດຕາມລະບຽບການ ແລະ ຫຼັກການວິຊາສະເພາະຂອງການສືບສວນ-ສອບສວນ;

3. ປະຕິບັດພັນທະອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

## ໝວດທີ 4
## ການນໍາໃຊ້ມາດຕະການທາງກົດໝາຍ ແລະ ການປະຕິບັດຄໍາຕັດສິນຂອງສານ

**ມາດຕາ 46 (ໃໝ່) ການນໍາໃຊ້ມາດຕະການທາງກົດໝາຍ**

ການນໍາໃຊ້ມາດຕະການທາງກົດໝາຍ ຈະດໍາເນີນໄດ້ ກໍຕໍ່ເມື່ອມີການລະເມີດກົດໝາຍ ແລະ ຂໍ້ຫ້າມ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 79, 80 ແລະ ມາດຕາ 81 ຂອງກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງ ລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ.

**ມາດຕາ 47 (ປັບປຸງ) ການປະຕິບັດຄໍາຕັດສິນຂອງສານ**

ເມື່ອຄໍາຕັດສິນຂອງສານ ທີ່ໃຊ້ໄດ້ຢ່າງເດັດຂາດແລ້ວ ຕ້ອງນໍາເອົາຄໍາຕັດສິນດັ່ງກ່າວນັ້ນມາປະຕິບັດຢ່າງເຂັ້ມງວດ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍວ່າດ້ວຍການປະຕິບັດຄໍາຕັດສິນຂອງສານ. ອົງການຕ້ານການສໍ້ລາດບັງຫຼວງ ຕ້ອງນໍາເອົາຄໍາຕັດສິນນັ້ນມາເປີດເຜີຍ ໃຫ້ສັງຄົມຮັບຮູ້ ໂດຍຜ່ານພາຫະນະສື່ມວນຊົນ.

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ບໍ່ມີສິດແຊກແຊງ, ຂັດຂວາງ ການປະຕິບັດຄໍາຕັດສິນຂອງສານ ກ່ຽວກັບຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ພົວພັນກັບການສໍ້ລາດບັງຫຼວງ ຢ່າງເດັດຂາດ.

**ມາດຕາ 48 (ປັບປຸງ) ການຕິດຕາມ ການນໍາໃຊ້ມາດຕະການທາງກົດໝາຍ ແລະ ການປະຕິບັດຄໍາຕັດສິນຂອງສານ**

ອົງການຕ້ານການສໍ້ລາດບັງຫຼວງ ຕ້ອງຕິດຕາມການນໍາໃຊ້ມາດຕະການທາງກົດໝາຍ ແລະ ຊຸກຍູ້ໃຫ້ປະຕິບັດຄໍາຕັດສິນຂອງສານ ກ່ຽວກັບຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ພົວພັນກັບການສໍ້ລາດບັງຫຼວງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ ເພື່ອຮັບປະກັນໃຫ້ການນໍາໃຊ້ມາດຕະການທາງກົດໝາຍ ແລະ ການປະຕິບັດຄໍາຕັດສິນຂອງສານ ຢ່າງເຂັ້ມງວດ, ຖືກຕ້ອງ ແລະ ຄົບຖ້ວນ.

# ພາກທີ IV
# ການຮ່ວມມືສາກົນ ກ່ຽວກັບການຕ້ານການສໍ້ລາດບັງຫຼວງ

**ມາດຕາ 49 (ໃໝ່) ຫຼັກການການຮ່ວມມືສາກົນ**

ການຮ່ວມມືສາກົນກ່ຽວກັບການຕ້ານການສໍ້ລາດບັງຫຼວງ ລະຫວ່າງອົງການທີ່ມີສິດອໍານາດຂອງ ສປປ ລາວ ແລະ ຕ່າງປະເທດ ໃຫ້ປະຕິບັດຕາມຫຼັກການເຄົາລົບ ເອກະລາດ, ອໍານາດອະທິປະໄຕ ແລະ ຜືນແຜ່ນດິນ ອັນຄົບຖ້ວນຂອງຊາດ, ບໍ່ແຊກແຊງເຂົ້າໃນວຽກງານພາຍໃນຂອງກັນ ແລະ ກັນ, ສະເໝີພາບ, ຕ່າງຝ່າຍຕ່າງມີຜົນປະໂຫຍດ ແລະ ສອດຄ່ອງກັບ ສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

**ມາດຕາ 50 (ໃໝ່) ເນື້ອໃນການຮ່ວມມືສາກົນ**

ການຮ່ວມມືສາກົນກ່ຽວກັບການຕ້ານການສໍ້ລາດບັງຫຼວງ ໃຫ້ປະຕິບັດຕາມເນື້ອໃນ ດັ່ງນີ້:

1. ເກັບກໍາ, ຄົ້ນຄວ້າ ແລະ ແລກປ່ຽນ ຂໍ້ມູນ ຂ່າວສານ, ເຕັກໂນໂລຊີ ແລະ ບົດຮຽນ ກ່ຽວກັບການຕ້ານການສໍ້ລາດບັງຫຼວງ;
2. ເຊັນສັນຍາຮ່ວມມືກັບຕ່າງປະເທດ ຫຼື ເຂົ້າຮ່ວມເປັນພາຄີສົນທິສັນຍາ ແລະ ສັນຍາສາກົນ ກ່ຽວກັບການຕ້ານການສໍ້ລາດບັງຫຼວງ;
3. ຊ່ວຍເຫຼືອຊຶ່ງກັນ ແລະ ກັນ ດ້ານວິຊາການ, ການພັດທະນາບຸກຄະລາກອນ ເພື່ອຍົກສູງຄວາມອາດສາມາດໃຫ້ແກ່ພະນັກງານ ແລະ ເຈົ້າໜ້າທີ່ ທີ່ກ່ຽວຂ້ອງ;
4. ສົ່ງຜູ້ຮ້າຍຂ້າມແດນກ່ຽວກັບຄະດີການສໍ້ລາດບັງຫຼວງ;
5. ເກັບກູ້ຊັບສິນ ກ່ຽວກັບຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ;
6. ປະຕິບັດສົນທິສັນຍາ ທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

**ມາດຕາ 51 (ໃໝ່) ການຊ່ວຍເຫຼືອ ຊຶ່ງກັນ ແລະ ກັນທາງກົດໝາຍ**

ການຊ່ວຍເຫຼືອ ຊຶ່ງກັນ ແລະ ກັນທາງກົດໝາຍ ແມ່ນ ການຮ່ວມມື ຊຶ່ງກັນ ແລະ ກັນທາງກົດໝາຍ ລະຫວ່າງລັດ ສປປ ລາວ ກັບ ລັດຕ່າງປະເທດ ກ່ຽວກັບການເອົາຄໍາໃຫ້ການ, ການສະໜອງຂໍ້ມູນ, ຫຼັກຖານ, ການເຂົ້າຮ່ວມຂອງບຸກຄົນໃນລັດທີ່ຮ້ອງຂໍ, ການເຂົ້າຮ່ວມໃນການດໍາເນີນຄະດີອາຍາ ຂອງບຸກຄົນທີ່ປະຕິບັດໂທດ ຫຼື ຖືກກັກຂັງ, ການຊອກຮູ້ບ່ອນຢູ່ ຫຼື ເອກະລັກຂອງບຸກຄົນ, ການກວດຄົ້ນ, ການຍຶດ ແລະ ສົ່ງມອບຂໍ້ມູນ, ຫຼັກຖານ, ການຍຶດ ຫຼື ອາຍັດຊັບ, ວັດຖຸສິ່ງຂອງ, ການຮິບຊັບ ຫຼື ຮິບວັດຖຸສິ່ງຂອງ ແລະ ບັນຫາອື່ນ ທາງອາຍາ ທີ່ຮ້ອງຂໍ ຫຼື ຖືກຮ້ອງຂໍ, ການສົ່ງຜູ້ຮ້າຍຂ້າມແດນ, ການຂໍຂໍ້ມູນ ແລະ ຫຼັກຖານເພີ່ມເຕີມ ກ່ຽວກັບການກະທໍາຜິດໃນສະຖານການສໍ້ລາດບັງຫຼວງ.

ສໍາລັບກົນໄກ ແລະ ຂັ້ນຕອນ ການຊ່ວຍເຫຼືອ ຊຶ່ງກັນ ແລະ ກັນທາງກົດໝາຍ ໃຫ້ປະຕິບັດຕາມກົດໝາຍວ່າດ້ວຍການຮ່ວມມືລະຫວ່າງປະເທດທາງອາຍາ, ກົດໝາຍວ່າດ້ວຍການສົ່ງຜູ້ຮ້າຍຂ້າມແດນ, ກົດໝາຍອື່ນທີ່ກ່ຽວຂ້ອງ ຂອງ ສປປ ລາວ, ສົນທິສັນຍາທີ່ ສປປ ລາວ ເປັນພາຄີ ແລະ ສັນຍາສາກົນ ທີ່ກ່ຽວຂ້ອງ.

# ພາກທີ V
# ອົງການຕ້ານການສໍ້ລາດບັງຫຼວງ
## ໝວດທີ 1
## ລະບົບການຈັດຕັ້ງ ຂອງອົງການຕ້ານການສໍ້ລາດບັງຫຼວງ

**ມາດຕາ 52 (ໃໝ່) ອົງການຕ້ານການສໍ້ລາດບັງຫຼວງ**

ອົງການຕ້ານການສໍ້ລາດບັງຫຼວງ ແມ່ນ ອົງການກວດກາລັດ ຊຶ່ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ ໃນການຕ້ານການສໍ້ລາດບັງຫຼວງ ຢ່າງເປັນເອກະລາດ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້.

**ມາດຕາ 53 ລະບົບການຈັດຕັ້ງ**

ລະບົບການຈັດຕັ້ງ ຂອງອົງການຕ້ານການສໍ້ລາດບັງຫຼວງ ມີ ດັ່ງນີ້:

1. ອົງການຕ້ານການສໍ້ລາດບັງຫຼວງສູນກາງ;
2. ອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ;
3. ອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ;
4. ອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ.

**ມາດຕາ 54 (ໃໝ່) ທີ່ຕັ້ງ ຂອງອົງການຕ້ານການສໍ້ລາດບັງຫຼວງ**

ທີ່ຕັ້ງຂອງອົງການຕ້ານການສໍ້ລາດບັງຫຼວງແຕ່ລະຂັ້ນ ມີ ດັ່ງນີ້:

1. ອົງການຕ້ານການສໍ້ລາດບັງຫຼວງສູນກາງ ຊຶ່ງແມ່ນ ການຈັດຕັ້ງໜຶ່ງ ທີ່ຂຶ້ນກັບການຊີ້ນຳໂດຍກົງຂອງປະທານປະເທດ ແຫ່ງ ສປປ ລາວ;
2. ອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ ຊຶ່ງແມ່ນ ການຈັດຕັ້ງໜຶ່ງ ທີ່ຂຶ້ນກັບການຊີ້ນຳໂດຍກົງຂອງ ລັດຖະມົນຕີ, ຫົວໜ້າອົງການ;
3. ອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ຊຶ່ງແມ່ນ ການຈັດຕັ້ງໜຶ່ງ ທີ່ຂຶ້ນກັບການຊີ້ນຳໂດຍກົງຂອງປະທານຄະນະກຳມະການປົກຄອງຂັ້ນແຂວງ;
4. ອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ ຊຶ່ງແມ່ນ ການຈັດຕັ້ງໜຶ່ງ ທີ່ຂຶ້ນກັບການຊີ້ນຳໂດຍກົງຂອງປະທານຄະນະກຳມະການປົກຄອງຂັ້ນເມືອງ.

## ໝວດທີ 2
## ພາລະບົດບາດ ຂອງອົງການຕ້ານການສໍ້ລາດບັງຫຼວງ

**ມາດຕາ 55 (ໃໝ່) ພາລະບົດບາດ ຂອງອົງການຕ້ານການສໍ້ລາດບັງຫຼວງສູນກາງ**

ອົງການຕ້ານການສໍ້ລາດບັງຫຼວງສູນກາງ ມີພາລະບົດບາດເປັນເສນາທິການ ໃຫ້ປະທານປະເທດ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ, ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ກ່ຽວກັບການສໍ້ລາດບັງຫຼວງ ຕາມຂອບເຂດ ສິດ, ໜ້າທີ່ ແລະ ນຳພາ ຊີ້ນຳ ວຽກງານດັ່ງກ່າວ ໃນຂອບເຂດທົ່ວປະເທດ.

**ມາດຕາ 56 (ໃໝ່) ພາລະບົດບາດ ຂອງອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ**

ອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ ແມ່ນ ກົມກວດກາລັດ ກະຊວງ, ອົງການ ຊຶ່ງມີພາລະບົດບາດເປັນເສນາທິການໃຫ້ ລັດຖະມົນຕີ, ຫົວໜ້າອົງການ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ, ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ກ່ຽວກັບການສໍ້ລາດບັງຫຼວງ ຕາມຂອບເຂດ ສິດ, ໜ້າທີ່ ແລະ ນຳພາ ຊີ້ນຳ ວຽກງານດັ່ງກ່າວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 57 (ໃໝ່) ພາລະບົດບາດ ຂອງອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ**

ອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ມີພາລະບົດບາດເປັນເສນາທິການໃຫ້ປະທານຄະນະກຳມະການປົກຄອງຂັ້ນແຂວງ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ, ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ກ່ຽວກັບການສໍ້ລາດບັງຫຼວງ ຕາມຂອບເຂດ ສິດ, ໜ້າທີ່ ແລະ ນຳພາ ຊີ້ນຳ ວຽກງານດັ່ງກ່າວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

**ມາດຕາ 58 (ໃໝ່) ພາລະບົດບາດ ຂອງອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ**

ອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ ມີພາລະບົດບາດເປັນເສນາທິການໃຫ້ປະທານຄະນະກຳມະການປົກຄອງຂັ້ນເມືອງ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ, ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ກ່ຽວກັບການສໍ້ລາດບັງຫຼວງ ຕາມຂອບເຂດ ສິດ, ໜ້າທີ່ ແລະ ນຳພາ ຊີ້ນຳ ວຽກງານດັ່ງກ່າວ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ.

## ໝວດທີ 3
## ສິດ ແລະ ໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງ

**ມາດຕາ 59 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງສູນກາງ**

ອົງການຕ້ານການສໍ້ລາດບັງຫຼວງສູນກາງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ມະຕິຂອງສະພາແຫ່ງຊາດ;
2. ຄົ້ນຄວ້າ ສ້າງນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເພື່ອສະເໜີ ປະທານປະເທດ ຫຼື ສະພາແຫ່ງຊາດ ພິຈາລະນາ;
3. ຜັນຂະຫຍາຍ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ ເປັນ ລະບຽບການ, ແຜນການ, ແຜນງານ, ໂຄງການ ຂອງຕົນ ແລະ ຈັດຕັ້ງປະຕິບັດ;
4. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ແຜນຍຸດທະສາດ ກ່ຽວກັບການສະກັດກັ້ນ ແລະ ຕ້ານການສໍ້ລາດບັງຫຼວງ;
5. ອອກຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ ແລະ ຊີ້ນຳ ການຈັດຕັ້ງປະຕິບັດ;
6. ຊີ້ນຳ, ກວດກາການຈັດຕັ້ງປະຕິບັດ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ ໃນຂອບເຂດທົ່ວປະເທດ;
7. ຮັບແຈ້ງ ແລະ ກວດກາ ຊັບສິນ ໃນຖັນແຖວພະນັກງານຂອງລັດຂັ້ນສູນກາງຄຸ້ມຄອງ;
8. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການສໍ້ລາດບັງຫຼວງ;

9. ດຳເນີນການຕິດຕາມ ກວດກາ ກ່ຽວກັບການຕ້ານການສໍ້ລາດບັງຫຼວງ ໃນຖັນແຖວພະນັກງານຂັ້ນສູນກາງຄຸ້ມຄອງ;

10. ອອກຄຳສັ່ງ ເປີດ ຫຼື ບໍ່ເປີດ ການສືບສວນ-ສອບສວນ, ພາຕົວ, ກັກຕົວ, ດຳເນີນການສືບສວນ-ສອບສວນ ແລະ ສະຫຼຸບຜົນການສືບສວນ-ສອບສວນ ພ້ອມທັງປະກອບສຳນວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນ ກ່ຽວກັບຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

11. ຕິດຕາມ ແລະ ຂໍອຸທອນ ຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນ ເປັນຕົ້ນ ຄຳສັ່ງບໍ່ສັ່ງຟ້ອງ;

12. ສະເໜີງົດຕຳແໜ່ງ, ໜ້າທີ່ ຊົ່ວຄາວ ຫຼື ບໍ່ໃຫ້ ຍົກຍ້າຍ, ແຕ່ງຕັ້ງ, ສັບປ່ຽນ ຜູ້ຖືກກວດກາ ຫຼື ຖືກສືບສວນ-ສອບສວນ ໃນຄະດີການສໍ້ລາດບັງຫຼວງ ເວລາດຳເນີນການກວດກາ ຫຼື ສືບສວນ-ສອບສວນ;

13. ພົວພັນ ແລະ ປະສານສົມທົບກັບ ກະຊວງ, ອົງການ, ອົງການປົກຄອງທ້ອງຖິ່ນ ແລະ ພາກສ່ວນອື່ນທີ່ກ່ຽວຂ້ອງໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ;

14. ພິຈາລະນາ, ຕົກລົງ ແລະ ນຳໃຊ້ມາດຕະການທາງກົດໝາຍ ຕໍ່ຜູ້ຖືກກວດກາ ຫຼື ຖືກສືບສວນ-ສອບສວນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ;

15. ພົວພັນ ຮ່ວມມືກັບ ຕ່າງປະເທດ, ພາກພື້ນ ແລະ ສາກົນ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ;

16. ສະຫຼຸບ ແລະ ລາຍງານການເຄື່ອນໄຫວວຽກງານຕ້ານການສໍ້ລາດບັງຫຼວງ ຕໍ່ ປະທານປະເທດ, ສະພາແຫ່ງຊາດ ຢ່າງເປັນປົກກະຕິ;

17. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 60 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ**

ອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການຂອງອົງການຕ້ານການສໍ້ລາດບັງຫຼວງສູນກາງ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ ຕາມຂະແໜງການ ແລະ ການບໍລິຫານ;

2. ຜັນຂະຫຍາຍ ມະຕິກອງປະຊຸມວຽກງານກວດກາທົ່ວປະເທດ, ແຜນຍຸດທະສາດພັດທະນາຂອງກະຊວງ, ອົງການ ເປັນແຜນການ, ແຜນງານ ແລະ ໂຄງການຂອງຕົນ ເພື່ອສະເໜີລັດຖະມົນຕີ, ຫົວໜ້າອົງການພິຈາລະນາຕົກລົງ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ;

4. ຮັບແຈ້ງ ແລະ ກວດກາ ຊັບສິນ ຂອງພະນັກງານລັດຂັ້ນ ກະຊວງ, ອົງການ ຄຸ້ມຄອງ;

5. ສະເໜີ ລັດຖະມົນຕີ, ຫົວໜ້າອົງການ ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ, ລະບຽບການ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ ຕາມຂະແໜງການສາຍຕັ້ງຂອງຕົນ;

6. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການສໍ້ລາດບັງຫຼວງ;

7. ດຳເນີນ ການຕິດຕາມ ກວດກາ ກ່ຽວກັບການຕ້ານການສໍ້ລາດບັງຫຼວງ ໃນຖັນແຖວພະນັກງານຂັ້ນ ກະຊວງ, ອົງການ ຄຸ້ມຄອງ ແລະ ພະນັກງານອື່ນ ຕາມການມອບໝາຍ;

8. ດໍາເນີນການສືບສວນ-ສອບສວນ ເປົ້າໝາຍທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງກະຊວງ, ອົງການຕົນ ຕາມການມອບໝາຍຂອງອົງການຕ້ານການສໍ້ລາດບັງຫຼວງສູນກາງ ແລະ ສະຫຼຸບຜົນການສືບສວນ-ສອບສວນ ຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ ແລ້ວລາຍງານຕໍ່ອົງການຕ້ານ ການສໍ້ລາດບັງຫຼວງສູນກາງ ເພື່ອພິຈາລະນາ;

9. ຕິດຕາມ ແລະ ຂໍອຸທອນ ຄໍາສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນ ເປັນຕົ້ນ ຄໍາສັ່ງບໍ່ສັ່ງຟ້ອງ;

10. ສະເໜີໂຈະຕໍາແໜ່ງ, ໜ້າທີ່ ຊົ່ວຄາວ ຫຼື ບໍ່ໃຫ້ ຍົກຍ້າຍ, ແຕ່ງຕັ້ງ, ສັບປ່ຽນ ຜູ້ຖືກກວດກາ ຫຼື ຖືກສືບສວນ-ສອບສວນ ໃນຄະດີການສໍ້ລາດບັງຫຼວງ ເວລາດໍາເນີນການກວດກາ ຫຼື ສືບສວນ-ສອບສວນ;

11. ພົວພັນ ແລະ ປະສານສົມທົບກັບພາກສ່ວນທີ່ກ່ຽວຂ້ອງ ໃນການນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງຕົນ;

12. ສະເໜີມາດຕະການ, ວິທີການແກ້ໄຂຜົນການກວດກາ, ການສືບສວນ-ສອບສວນ ໃຫ້ອົງການ ຈັດຕັ້ງທີ່ກ່ຽວຂ້ອງ ແລະ ຂັ້ນເທິງຂອງຕົນ ເພື່ອພິຈາລະນາຕົກລົງ;

13. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຕ້ານການສໍ້ລາດບັງຫຼວງ ຕໍ່ ລັດຖະມົນຕີ, ຫົວໜ້າອົງການ ແລະ ອົງການຕ້ານການສໍ້ລາດບັງຫຼວງສູນກາງ ຢ່າງເປັນປົກກະຕິ;

14. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 61 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ**

ອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມ ຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະຕິບັດ ລັດຖະທໍາມະນູນ, ກົດໝາຍ, ແຜນຍຸດທະສາດ ແລະ ມະຕິ ຂອງສະພາປະຊາຊົນຂັ້ນ ແຂວງ;

2. ຜັນຂະຫຍາຍ ກົດໝາຍ, ແຜນຍຸດທະສາດ, ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ຂອງອົງການຕ້ານການ ສໍ້ລາດບັງຫຼວງສູນກາງ, ອົງການປົກຄອງຂັ້ນແຂວງ ເປັນ ແຜນການ, ແຜນງານ ແລະ ໂຄງການ ຂອງຕົນ ແລະ ຈັດຕັ້ງປະຕິບັດ;

3. ໂຄສະນາ ເຜີຍແຜ່ ນະໂຍບາຍ, ກົດໝາຍ ແລະ ແຜນການ ກ່ຽວກັບວຽກງານຕ້ານການສໍ້ລາດບັງ ຫຼວງ;

4. ຊີ້ນໍາ, ກວດກາການຈັດຕັ້ງປະຕິບັດວຽກງານຕ້ານການສໍ້ລາດບັງຫຼວງ;

5. ຮັບ, ພິຈາລະນາ ແລະ ແກ້ໄຂ ຄໍາສະເໜີ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບ ການສໍ້ລາດບັງຫຼວງ;

6. ຮັບແຈ້ງ ແລະ ກວດກາ ຊັບສິນ ຂອງພະນັກງານລັດຂັ້ນຕົນຄຸ້ມຄອງ;

7. ອອກຄໍາສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ, ດໍາເນີນການສືບສວນ-ສອບສວນ ແລະ ສະຫຼຸບຜົນການສືບສວນ-ສອບສວນ ພ້ອມທັງປະກອບສໍານວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນ ກ່ຽວກັບ ຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ ຕາມທີ່ໄດ້ກໍານົດໄວ້ໃນ ກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

8. ດໍາເນີນການສືບສວນ-ສອບສວນ ເປົ້າໝາຍທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ແຂວງ, ນະຄອນຫຼວງ ແລະ ພະນັກງານອື່ນ ຕາມການມອບໝາຍ ແລ້ວປະກອບສໍານວນຄະດີສົ່ງໃຫ້ອົງການໄອຍະການປະຊາຊົນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍສະບັບນີ້ ແລະ ກົດໝາຍອື່ນທີ່ກ່ຽວຂ້ອງ;

9. ຕິດຕາມ ແລະ ຂໍອຸທອນ ຄໍາສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນ ເປັນຕົ້ນ ຄໍາສັ່ງບໍ່ສັ່ງຟ້ອງ;

10. ສະເໜີງົດຕຳແໜ່ງ, ໜ້າທີ່ ຊົ່ວຄາວ ຫຼື ບໍ່ໃຫ້ ຍົກຍ້າຍ, ແຕ່ງຕັ້ງ, ສັບປ່ຽນ ຜູ້ຖືກກວດກາ ຫຼື ຖືກສືບສວນ-ສອບສວນ ໃນຄະດີການສໍ້ລາດບັງຫຼວງ ເວລາດຳເນີນການກວດກາ ຫຼື ສືບສວນ-ສອບສວນ;

11. ພົວພັນ ແລະ ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ ຂອງຕົນ;

12. ສະເໜີ ມາດຕະການ, ວິທີການແກ້ໄຂຜົນການກວດກາ ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຂັ້ນເທິງຂອງຕົນ ເພື່ອພິຈາລະນາຕົກລົງ;

13. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຕ້ານການສໍ້ລາດບັງຫຼວງ ຕໍ່ ປະທານຄະນະກຳມະການປົກຄອງຂັ້ນແຂວງ, ຄະນະປະຈຳສະພາປະຊາຊົນຂັ້ນແຂວງ ແລະ ອົງການຕ້ານການສໍ້ລາດບັງຫຼວງສູນກາງ ຢ່າງເປັນປົກກະຕິ;

14. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 62 (ປັບປຸງ) ສິດ ແລະ ໜ້າທີ່ ຂອງອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ**

ອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ປະຕິບັດ ລັດຖະທຳມະນູນ, ກົດໝາຍ, ລະບຽບການ ແຜນການ, ແຜນງານ ແລະ ໂຄງການ ຂອງອົງການຕ້ານການສໍ້ລາດບັງຫຼວງ ຂັ້ນເທິງ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ;

2. ເຜີຍແຜ່ ນະໂຍບາຍ, ກົດໝາຍ, ລະບຽບການ, ແຜນການ, ແຜນງານ ແລະ ໂຄງການ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ;

3. ຊີ້ນຳ, ກວດກາການຈັດຕັ້ງປະຕິບັດວຽກງານຕ້ານການສໍ້ລາດບັງຫຼວງ;

4. ຮັບ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ ຂອງ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ກ່ຽວກັບການສໍ້ລາດບັງຫຼວງ;

5. ດຳເນີນ ການຕິດຕາມ, ກວດກາ ກ່ຽວກັບການຕ້ານການສໍ້ລາດບັງຫຼວງ ຕໍ່ ເປົ້າໝາຍທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງ ເມືອງ, ເທດສະບານ, ນະຄອນ ຕາມການມອບໝາຍ;

6. ຮັບແຈ້ງ ແລະ ກວດກາ ຊັບສິນ ຂອງພະນັກງານລັດຂັ້ນຕົນຄຸ້ມຄອງ;

7. ດຳເນີນການສືບສວນ-ສອບສວນ ເປົ້າໝາຍໃນຂອບເຂດຂັ້ນຕົນຄຸ້ມຄອງ ຕາມການມອບໝາຍຂອງອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ແລະ ສະຫຼຸບຜົນການສືບສວນ-ສອບສວນ ຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ ແລ້ວລາຍງານຕໍ່ອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ເພື່ອພິຈາລະນາ;

8. ຕິດຕາມ ແລະ ຂໍອຸທອນ ຄຳສັ່ງ ຂອງຫົວໜ້າອົງການໄອຍະການປະຊາຊົນ ເປັນຕົ້ນ ຄຳສັ່ງບໍ່ສັ່ງຟ້ອງ;

9. ສະເໜີງົດຕຳແໜ່ງ, ໜ້າທີ່ ຊົ່ວຄາວ ຫຼື ບໍ່ໃຫ້ ຍົກຍ້າຍ, ແຕ່ງຕັ້ງ, ສັບປ່ຽນ ຜູ້ຖືກກວດກາ ຫຼື ຖືກສືບສວນ-ສອບສວນ ໃນຄະດີການສໍ້ລາດບັງຫຼວງ ເວລາດຳເນີນການກວດກາ ຫຼື ສືບສວນ-ສອບສວນ;

10. ພົວພັນ ແລະ ປະສານສົມທົບກັບ ພາກສ່ວນທີ່ກ່ຽວຂ້ອງໃນການນຳໃຊ້ສິດ ແລະ ປະຕິບັດໜ້າທີ່ຂອງຕົນ;

11. ສະເໜີມາດຕະການ, ວິທີການແກ້ໄຂຜົນການກວດກາ, ສືບສວນ-ສອບສວນ ໃຫ້ອົງການຈັດຕັ້ງທີ່ກ່ຽວຂ້ອງ ແລະ ຂັ້ນເທິງຂອງຕົນ ເພື່ອພິຈາລະນາຕົກລົງ;

12. ສະຫຼຸບ ແລະ ລາຍງານ ການເຄື່ອນໄຫວວຽກງານຕ້ານການສໍ້ລາດບັງຫຼວງ ຕໍ່ ປະທານຄະນະກຳມະການປົກຄອງຂັ້ນເມືອງ ແລະ ອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ຢ່າງເປັນປົກກະຕິ;

13. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

## ໝວດທີ 4
## ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການຕ້ານການສໍ້ລາດບັງຫຼວງ

**ມາດຕາ 63 (ໃໝ່) ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການຕ້ານການສໍ້ລາດບັງຫຼວງສູນກາງ**

ການຈັດຕັ້ງ ຂອງອົງການຕ້ານການສໍ້ລາດບັງຫຼວງສູນກາງ ປະກອບດ້ວຍ ກົມ ແລະ ພະແນກ.

ບຸກຄະລາກອນ ຂອງອົງການຕ້ານການສໍ້ລາດບັງຫຼວງສູນກາງ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ອົງການ, ຫົວໜ້າ, ຮອງຫົວໜ້າ ກົມ, ຫົວໜ້າ, ຮອງຫົວໜ້າ ພະແນກ ແລະ ລັດຖະກອນວິຊາການ.

**ມາດຕາ 64 (ໃໝ່) ຫົວໜ້າ ອົງການຕ້ານການສໍ້ລາດບັງຫຼວງສູນກາງ**

ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ຖືກເລືອກຕັ້ງ ຫຼື ປົດຕໍາແໜ່ງ ໂດຍກອງປະຊຸມສະພາ ແຫ່ງຊາດ ຕາມການສະເໜີຂອງປະທານປະເທດ, ມີອາຍຸການເທົ່າກັບ ອາຍຸການຂອງສະພາແຫ່ງຊາດແຕ່ລະຊຸດ, ມີຄວາມຮັບຜິດຊອບຕໍ່ ປະທານປະເທດ, ສະພາແຫ່ງຊາດ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ.

ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ມີ ສິດ ແລະ ໜ້າທີ່ ດັ່ງນີ້:

1. ນໍາພາ ຊີ້ນໍາ ການຈັດຕັ້ງປະຕິບັດວຽກງານຕ້ານການສໍ້ລາດບັງຫຼວງ ໃນຂອບເຂດທົ່ວປະເທດ;
2. ອອກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີ;
3. ໂຈະການປະຕິບັດ, ລຶບລ້າງ ຫຼື ຍົກເລີກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ, ແຈ້ງການ ຫຼື ນິຕິກໍາອື່ນ ຂອງອົງການຕ້ານການສໍ້ລາດບັງຫຼວງຂັ້ນລຸ່ມ ທີ່ຂັດກັບກົດໝາຍ ຫຼື ຂັດກັບນິຕິກໍາໃຕ້ກົດໝາຍ ຂອງອົງການ ຕ້ານການສໍ້ລາດບັງຫຼວງສູນກາງ;
4. ຕົກລົງດໍາເນີນການກວດກາການສໍ້ລາດບັງຫຼວງ ຕາມພາລະບົດບາດ, ສິດ, ໜ້າທີ່ ຂອງຕົນ. ໃນກໍລະ ນີບັນຫາການຕົກລົງນັ້ນຫາກເກີນສິດ ແລະ ໜ້າທີ່ ຂອງຕົນ ຕ້ອງສະເໜີຕໍ່ປະທານປະເທດ ເພື່ອພິຈາລະນາ ຕົກລົງ;
5. ອອກ ຄໍາສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ, ໝາຍຮຽກ, ໝາຍເຊີນ, ຄໍາສັ່ງພາຕົວ, ຄໍາສັ່ງ ກັກຕົວ, ຄໍາສັ່ງຄຸມຕົວຢູ່ກັບທີ່, ຄໍາສັ່ງ ຢຶດ ຫຼື ອາຍັດຊັບ, ຄໍາສັ່ງປ່ອຍຕົວຜູ້ຖືກສົງໄສ, ຄໍາສັ່ງ ໂຈະ ຫຼື ຊັດມ້ຽນ ຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ;
6. ສະເໜີຕໍ່ ລັດຖະມົນຕີ, ຫົວໜ້າອົງການ, ປະທານຄະນະກໍາມະການປົກຄອງຂັ້ນແຂວງ ດໍາເນີນການ ກວດກາ ແລະ ແກ້ໄຂຜົນການກວດກາການສໍ້ລາດບັງຫຼວງ ໃນຂອບເຂດການຄຸ້ມຄອງຂອງ ກະຊວງ, ອົງການ, ແຂວງ, ນະຄອນຫຼວງ;
7. ສະເໜີປະທານປະເທດ ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຮອງຫົວໜ້າອົງການຕ້ານການສໍ້ລາດບັງ ຫຼວງສູນກາງ;
8. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ, ປະຕິບັດນະໂຍບາຍຍ້ອງຍໍ ຫຼື ລົງວິໄນ ຕໍ່ພະນັກງານ-ລັດຖະກອນ ຂອງອົງການຕ້ານການສໍ້ລາດບັງຫຼວງ ທີ່ຂຶ້ນກັບຄວາມຮັບຜິດຊອບ ແລະ ຂອບເຂດສິດຂອງຕົນ;
9. ແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ຫົວໜ້າ, ຮອງຫົວໜ້າ ອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ;
10. ລາຍງານຜົນການຈັດຕັ້ງປະຕິບັດວຽກງານຕ້ານການສໍ້ລາດບັງຫຼວງ ຕໍ່ກອງປະຊຸມສະພາແຫ່ງຊາດ ຫຼື ຄະນະປະຈໍາສະພາແຫ່ງຊາດ ພິຈາລະນາ;
11. ນໍາໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກໍານົດໄວ້ໃນກົດໝາຍ.

**ມາດຕາ 65 (ໃໝ່) ຮອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ**

ຮອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານປະເທດ ຕາມການສະເໜີຂອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ.

ຮອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ມີ ສິດ ແລະ ໜ້າທີ່ ຊ່ວຍຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ. ໃນກໍລະນີ ຫົວໜ້າບໍ່ຢູ່ ຫຼື ຕິດຂັດ ຮອງຫົວໜ້າຜູ້ໄດ້ຮັບມອບໝາຍຈາກຫົວໜ້າ ເປັນຜູ້ຮັກສາການແທນ.

**ມາດຕາ 66 (ໃໝ່) ຫົວໜ້າ ແລະ ຮອງຫົວໜ້າ ກົມ, ພະແນກ ຂອງອົງການຕ້ານການສໍ້ລາດບັງຫຼວງສູນກາງ**

ຫົວໜ້າກົມ ຂອງອົງການຕ້ານການສໍ້ລາດບັງຫຼວງສູນກາງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ພາຍຫຼັງມີຄວາມເປັນເອກະພາບກັບອົງການທີ່ກ່ຽວຂ້ອງ.

ຮອງຫົວໜ້າກົມ ຂອງອົງການຕ້ານການສໍ້ລາດບັງຫຼວງສູນກາງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ບົນພື້ນຖານການເຫັນດີເປັນເອກະພາບກັບກະຊວງພາຍໃນ. ໃນກໍລະນີ ຫົວໜ້າກົມບໍ່ຢູ່ ຫຼື ຕິດຂັດ ຮອງຫົວໜ້າກົມຜູ້ໄດ້ຮັບມອບໝາຍຈາກຫົວໜ້າກົມ ເປັນຜູ້ຮັກສາການແທນ.

ຫົວໜ້າພະແນກ, ຮອງຫົວໜ້າພະແນກ ຂອງອົງການຕ້ານການສໍ້ລາດບັງຫຼວງສູນກາງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ຕາມການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ບົນພື້ນຖານການເຫັນດີເປັນເອກະພາບກັບຫົວໜ້າກົມທີ່ກ່ຽວຂ້ອງ ແລະ ຕາມການກຳນົດຕຳແໜ່ງງານ. ໃນກໍລະນີ ຫົວໜ້າພະແນກບໍ່ຢູ່ ຫຼື ຕິດຂັດ ຮອງຫົວໜ້າພະແນກຜູ້ໄດ້ຮັບມອບໝາຍຈາກຫົວໜ້າພະແນກ ເປັນຜູ້ຮັກສາການແທນ.

ສຳລັບສິດ ແລະ ໜ້າທີ່ ຂອງຫົວໜ້າ, ຮອງຫົວໜ້າ ກົມ, ພະແນກ ຂອງອົງການຕ້ານການສໍ້ລາດບັງຫຼວງສູນກາງ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 67 (ໃໝ່) ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ**

ການຈັດຕັ້ງຂອງອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ ປະກອບດ້ວຍ ກົມ ແລະ ພະແນກ.

ບຸກຄະລາກອນ ຂອງອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ ປະກອບດ້ວຍ ຫົວໜ້າ ແລະ ຮອງຫົວໜ້າ ກົມ, ຫົວໜ້າ, ຮອງຫົວໜ້າ ພະແນກ ແລະ ລັດຖະກອນວິຊາການ.

**ມາດຕາ 68 (ໃໝ່) ຫົວໜ້າກົມ ຂອງອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ**

ຫົວໜ້າກົມ ຂອງອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍນາຍົກລັດຖະມົນຕີ ຕາມການສະເໜີຂອງ ລັດຖະມົນຕີ, ຫົວໜ້າອົງການ ບົນພື້ນຖານການເຫັນດີເປັນເອກະພາບກັບຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ຮັບຜິດຊອບຕໍ່ ລັດຖະມົນຕີ, ຫົວໜ້າອົງການ, ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ.

ສຳລັບການແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ຫົວໜ້າກົມ ຂອງອົງການຕ້ານການສໍ້ລາດບັງຫຼວງ ສະພາແຫ່ງຊາດ, ສານປະຊາຊົນສູງສຸດ, ອົງການໄອຍະການປະຊາຊົນສູງສຸດ, ອົງການກວດສອບແຫ່ງລັດ ແລະ ອົງການອື່ນ ໃຫ້ປະຕິບັດຕາມກົດໝາຍທີ່ກ່ຽວຂ້ອງ ບົນພື້ນຖານການເຫັນດີເປັນເອກະພາບກັບຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ.

ຫົວໜ້າກົມ ຂອງອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບ ດັ່ງນີ້:

1. ຮັບຜິດຊອບຕໍ່ ລັດຖະມົນຕີ, ຫົວໜ້າອົງການ, ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ກ່ຽວກັບການຈັດຕັ້ງປະຕິບັດພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ;

2. ຊີ້ນຳ ວຽກງານຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂ ຄຳສະເໜີ ໃນຂອບເຂດການຄຸ້ມຄອງຂອງ ກະຊວງ, ອົງການ ແລະ ກວດກາການປະຕິບັດວຽກງານຂອງຂະແໜງການຕົນ;

3. ສະເໜີ ລັດຖະມົນຕີ, ຫົວໜ້າອົງການ ສ້າງ ຫຼື ປັບປຸງ ນິຕິກຳ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ;

4. ສະເໜີ ລັດຖະມົນຕີ, ຫົວໜ້າອົງການ ແຕ່ງຕັ້ງຄະນະກວດກາສະເພາະກິດ;

5. ດຳເນີນການກວດກາການສໍ້ລາດບັງຫຼວງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ຂອງຕົນ. ໃນກໍລະນີຫາກເກີນສິດ ແລະ ໜ້າທີ່ຂອງຕົນ ຕ້ອງສະເໜີ ລັດຖະມົນຕີ, ຫົວໜ້າອົງການ ເພື່ອພິຈາລະນາຕົກລົງ;

6. ສະເໜີ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ອອກຄຳສັ່ງເປີດການສືບສວນ-ສອບສວນ, ຄຳສັ່ງພາຕົວ, ຄຳສັ່ງກັກຕົວ, ຄຳສັ່ງຄຸມຕົວຢູ່ກັບທີ່, ຄຳສັ່ງ ຍຶດ ຫຼື ອາຍັດຊັບ, ຄຳສັ່ງປ່ອຍຕົວຜູ້ຖືກສົງໄສ, ຄຳສັ່ງໂຈະ ຫຼື ຊັດມ້ຽນ ຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ;

7. ອອກ ໝາຍຮຽກ, ໝາຍເຊີນ, ບັດເຊີນ ກ່ຽວກັບຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ;

8. ສະເໜີ ລັດຖະມົນຕີ, ຫົວໜ້າອົງການ ພິຈາລະນາຕົກລົງ ແກ້ໄຂຜົນການກວດກາການສໍ້ລາດບັງຫຼວງ. ໃນກໍລະນີຄຳສະເໜີດັ່ງກ່າວ ບໍ່ໄດ້ຮັບການພິຈາລະນາ ຫຼື ໄດ້ຮັບການພິຈາລະນາແລ້ວ ແຕ່ເຫັນວ່າບໍ່ຖືກຕ້ອງ ກໍມີສິດລາຍງານຕໍ່ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ເພື່ອພິຈາລະນາຕົກລົງ;

9. ພິຈາລະນາ ແລະ ແກ້ໄຂຄຳສະເໜີ, ແນະນຳ ຫົວໜ້າພະແນກຕ້ານການສໍ້ລາດບັງຫຼວງ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ;

10. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຕ້ານການສໍ້ລາດບັງຫຼວງ ຕໍ່ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;

11. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 69 (ໃໝ່) ຮອງຫົວໜ້າກົມ ຂອງອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ**

ຮອງຫົວໜ້າກົມ ຂອງອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີ, ຫົວໜ້າອົງການ ຕາມການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ບົນພື້ນຖານການເຫັນດີເປັນເອກະພາບກັບຫົວໜ້າກົມກວດກາລັດ ກະຊວງ, ອົງການ ທີ່ກ່ຽວຂ້ອງ.

ຮອງຫົວໜ້າກົມ ຂອງອົງການຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ ມີ ສິດ, ໜ້າທີ່ ຊ່ວຍຫົວໜ້າກົມ ແລະ ຮັບຜິດຊອບວຽກງານຕ້ານການສໍ້ລາດບັງຫຼວງ ຕາມການມອບໝາຍຂອງຫົວໜ້າກົມ. ໃນກໍລະນີຫົວໜ້າກົມບໍ່ຢູ່ ຫຼື ຕິດຂັດ ຮອງຫົວໜ້າກົມຜູ້ໄດ້ຮັບມອບໝາຍຈາກຫົວໜ້າກົມ ເປັນຜູ້ຮັກສາການແທນ.

**ມາດຕາ 70 (ໃໝ່) ຫົວໜ້າ, ຮອງຫົວໜ້າພະແນກ ຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ**

ຫົວໜ້າ, ຮອງຫົວໜ້າພະແນກ ຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍລັດຖະມົນຕີ, ຫົວໜ້າອົງການ ຕາມການສະເໜີຂອງກົມຈັດຕັ້ງ ແລະ ພະນັກງານ ບົນພື້ນຖານການເຫັນດີເປັນເອກະພາບກັບຫົວໜ້າກົມກວດກາລັດ ກະຊວງ, ອົງການ; ຮັບຜິດຊອບໂດຍກົງຕໍ່ຫົວໜ້າ, ຮອງຫົວໜ້າກົມ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ.

ສໍາລັບ ສິດ ແລະ ໜ້າທີ່ ຂອງ ຫົວໜ້າ, ຮອງຫົວໜ້າ ພະແນກຂອງກົມຕ້ານການສໍ້ລາດບັງຫຼວງ ກະຊວງ, ອົງການ ໄດ້ກໍານົດໄວ້ໃນລະບຽບການຕ່າງຫາກ.

**ມາດຕາ 71 (ໃໝ່) ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ**

ການຈັດຕັ້ງ ຂອງອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ປະກອບດ້ວຍ ຂະແໜງ.

ບຸກຄະລາກອນ ຂອງອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ປະກອບດ້ວຍ ຫົວໜ້າ, ຮອງຫົວໜ້າ ອົງການ, ຫົວໜ້າ, ຮອງຫົວໜ້າ ຂະແໜງ ແລະ ລັດຖະກອນວິຊາການ.

**ມາດຕາ 72 (ໃໝ່) ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ**

ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕໍາແໜ່ງ ໂດຍຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ຕາມການສະເໜີຂອງປະທານຄະນະກໍາມະການປົກຄອງ ຂັ້ນແຂວງ ພາຍຫຼັງສະພາປະຊາຊົນຂັ້ນແຂວງ ພິຈາລະນາຮັບຮອງ; ມີຄວາມຮັບຜິດຊອບຕໍ່ ຫົວໜ້າອົງການຕ້ານ ການສໍ້ລາດບັງຫຼວງສູນກາງ, ປະທານຄະນະກໍາມະການປົກຄອງຂັ້ນແຂວງ, ສະພາປະຊາຊົນຂັ້ນແຂວງ ກ່ຽວກັບ ວຽກງານຕ້ານການສໍ້ລາດບັງຫຼວງ.

ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດ ຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ນໍາພາ ຊີ້ນໍາ ການຈັດຕັ້ງປະຕິບັດວຽກງານຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄໍາສະເໜີ ຕາມຂອບເຂດສິດ ແລະ ຂັ້ນຄຸ້ມຄອງຂອງຕົນ;

2. ຮັບຜິດຊອບຕໍ່ ປະທານຄະນະກໍາມະການປົກຄອງຂັ້ນແຂວງ, ສະພາປະຊາຊົນຂັ້ນແຂວງ ແລະ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ກ່ຽວກັບການຈັດຕັ້ງປະຕິບັດ ສິດ ແລະ ໜ້າທີ່ ຂອງຕົນ;

3. ຕົກລົງດໍາເນີນການກວດກາການສໍ້ລາດບັງຫຼວງ ຕາມສິດ ແລະ ໜ້າທີ່ ຂອງຕົນ. ໃນກໍລະນີບັນຫາ ການຕົກລົງນັ້ນ ຫາກເກີນສິດ ແລະ ໜ້າທີ່ ຂອງຕົນ ຕ້ອງສະເໜີຕໍ່ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນ ກາງ ຫຼື ປະທານຄະນະກໍາມະການປົກຄອງຂັ້ນແຂວງ ເພື່ອພິຈາລະນາ;

4. ອອກ ຂໍ້ຕົກລົງ, ຄໍາສັ່ງ, ຄໍາແນະນໍາ ແລະ ແຈ້ງການ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ;

5. ອອກ ຄໍາສັ່ງເປີດ ຫຼື ບໍ່ເປີດການສືບສວນ-ສອບສວນ, ໝາຍຮຽກ, ໝາຍເຊີນ, ຄໍາສັ່ງພາຕົວ, ຄໍາສັ່ງກັກຕົວ, ຄໍາສັ່ງຄຸມຕົວຢູ່ກັບທີ່, ຄໍາສັ່ງ ຍຶດ ຫຼື ອາຍັດຊັບ, ຄໍາສັ່ງປ່ອຍຕົວຜູ້ຖືກສົງໄສ, ຄໍາສັ່ງ ໂຈະ ຫຼື ຊັດມ້ຽນຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນ ທີ່ຕິດພັນກັບການສໍ້ລາດບັງຫຼວງ;

6. ສະເໜີໃຫ້ ຫົວໜ້າພະແນກການ ຂອງ ແຂວງ, ນະຄອນຫຼວງ, ປະທານຄະນະກໍາມະການປົກຄອງ ຂັ້ນເມືອງ ດໍາເນີນການກວດກາການສໍ້ລາດບັງຫຼວງ ໃນຂອບເຂດການຄຸ້ມຄອງຂອງຕົນ;

7. ສະເໜີໃຫ້ປະທານຄະນະກໍາມະການປົກຄອງຂັ້ນແຂວງ ພິຈາລະນາຕົກລົງແກ້ໄຂຜົນການກວດກາ ການສໍ້ລາດບັງຫຼວງ ໃນຂອບເຂດການຄຸ້ມຄອງຂອງຕົນ. ໃນກໍລະນີບໍ່ພິຈາລະນາ ຫຼື ພິຈາລະນາແລ້ວ ແຕ່ເຫັນ ວ່າບໍ່ຖືກຕ້ອງ ມີສິດລາຍງານຕໍ່ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ເພື່ອພິຈະລາຕົກລົງ;

8. ລາຍງານຜົນການຈັດຕັ້ງປະຕິບັດວຽກງານຕ້ານການສໍ້ລາດບັງຫຼວງ ແລະ ແຜນການ ປະຈໍາປີ, ຫ້າປີ ຕໍ່ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ, ກອງປະຊຸມສະພາປະຊາຊົນຂັ້ນແຂວງ ຫຼື ຄະນະປະຈໍາສະພາ ປະຊາຊົນຂັ້ນແຂວງ ພິຈາລະນາ;

9. ສະເໜີໃຫ້ອົງການທີ່ກ່ຽວຂ້ອງ ພິຈາລະນາຄືນບັນຫາທີ່ບໍ່ເປັນເອກະພາບ ກ່ຽວກັບການແກ້ໄຂຜົນ ການກວດກາການສໍ້ລາດບັງຫຼວງ ລະຫວ່າງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ກັບ

ຫົວໜ້າພະແນກການ ຂອງ ແຂວງ, ນະຄອນຫຼວງ, ປະທານຄະນະກຳມະການປົກຄອງຂັ້ນເມືອງ. ໃນກໍລະນີທີ່ບໍ່ພິຈາລະນາຄືນ ຫຼື ພິຈາລະນາແລ້ວ ແຕ່ເຫັນວ່າບໍ່ຖືກຕ້ອງ ມີສິດລາຍງານຕໍ່ປະທານຄະນະກຳມະການປົກຄອງຂັ້ນແຂວງ ເພື່ອພິຈາລະນາຕົກລົງ;

10. ງົດການປະຕິບັດ, ລົບລ້າງ ຫຼື ຍົກເລີກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ, ແຈ້ງການ ແລະ ນິຕິກຳອື່ນ ຂອງອົງການຕ້ານການສໍ້ລາດບັງຫຼວງຂັ້ນເມືອງ ທີ່ຂັດກັບກົດໝາຍ ແລະ ລະບຽບການ ຂອງອົງການຕ້ານການສໍ້ລາດບັງຫຼວງຂັ້ນເທິງ;

11. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຕ້ານການສໍ້ລາດບັງຫຼວງ ຕໍ່ຂັ້ນເທິງຂອງຕົນຢ່າງເປັນປົກກະຕິ;

12. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

### ມາດຕາ 73 (ໃໝ່) ຮອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ

ຮອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ຕາມການສະເໜີຂອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ບົນພື້ນຖານການເຫັນດີເປັນເອກະພາບກັບປະທານຄະນະກຳມະການປົກຄອງຂັ້ນແຂວງ.

ຮອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຊ່ວຍຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ. ໃນກໍລະນີ ຫົວໜ້າບໍ່ຢູ່ ຫຼື ຕິດຂັດ ຮອງຫົວໜ້າຜູ້ໄດ້ຮັບມອບໝາຍຈາກຫົວໜ້າ ເປັນຜູ້ຮັກສາການແທນ.

### ມາດຕາ 74 (ໃໝ່) ຫົວໜ້າ, ຮອງຫົວໜ້າ ຂະແໜງ ຂອງອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ

ຫົວໜ້າ, ຮອງຫົວໜ້າ ຂະແໜງ ຂອງອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານຄະນະກຳມະການປົກຄອງຂັ້ນແຂວງ ຕາມການສະເໜີຂອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ, ຮັບຜິດຊອບໂດຍກົງຕໍ່ຫົວໜ້າ, ຮອງຫົວໜ້າ ອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ.

ຮອງຫົວໜ້າຂະແໜງ ຂອງອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ມີ ສິດ ແລະ ໜ້າທີ່ ຊ່ວຍຫົວໜ້າຂະແໜງ ຂອງອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າ. ໃນກໍລະນີ ຫົວໜ້າບໍ່ຢູ່ ຫຼື ຕິດຂັດ ຮອງຫົວໜ້າຜູ້ໄດ້ຮັບມອບໝາຍຈາກຫົວໜ້າ ເປັນຜູ້ຮັກສາການແທນ.

### ມາດຕາ 75 (ໃໝ່) ໂຄງປະກອບການຈັດຕັ້ງ ແລະ ບຸກຄະລາກອນ ຂອງອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ

ການຈັດຕັ້ງ ຂອງອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ ປະກອບດ້ວຍໜ່ວຍງານ.

ບຸກຄະລາກອນ ຂອງອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ ປະກອບດ້ວຍຫົວໜ້າ, ຮອງຫົວໜ້າອົງການ, ຫົວໜ້າ, ຮອງຫົວໜ້າ ໜ່ວຍງານ ແລະ ລັດຖະກອນວິຊາການ.

**ມາດຕາ 76 (ໃໝ່) ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ**

ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍຫົວໜ້າອົງການຕ້ານການສໍ້ລາດບັງຫຼວງສູນກາງ ຕາມການສະເໜີຂອງປະທານຄະນະກຳມະການປົກຄອງຂັ້ນແຂວງ ບົນພື້ນຖານການເຫັນດີເປັນເອກະພາບກັບ ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງແຂວງ, ນະຄອນຫຼວງ ແລະ ປະທານຄະນະກຳມະການປົກຄອງຂັ້ນເມືອງ, ຮັບຜິດຊອບຕໍ່ປະທານຄະນະກຳມະການປົກຄອງຂັ້ນເມືອງ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ.

ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຕາມຂອບເຂດຄວາມຮັບຜິດຊອບຂອງຕົນ ດັ່ງນີ້:

1. ນຳພາ ຊີ້ນຳ ການຈັດຕັ້ງປະຕິບັດວຽກງານຕ້ານການສໍ້ລາດບັງຫຼວງ, ພິຈາລະນາ ແລະ ແກ້ໄຂຄຳສະເໜີ;

2. ຮັບຜິດຊອບຕໍ່ ປະທານຄະນະກຳມະການປົກຄອງຂັ້ນເມືອງ, ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງຂັ້ນເທິງ ກ່ຽວກັບການຈັດຕັ້ງປະຕິບັດ ພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ;

3. ອອກ ຂໍ້ຕົກລົງ, ຄຳສັ່ງ, ຄຳແນະນຳ ແລະ ແຈ້ງການ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ;

4. ຕົກລົງດຳເນີນການກວດກາການສໍ້ລາດບັງຫຼວງ ຕາມພາລະບົດບາດ, ສິດ ແລະ ໜ້າທີ່ ຂອງຕົນ. ໃນກໍລະນີບັນຫາການຕົກລົງຫາກເກີນສິດ ແລະ ໜ້າທີ່ຂອງຕົນ ຕ້ອງສະເໜີຕໍ່ປະທານຄະນະກຳມະການປົກຄອງຂັ້ນເມືອງ ເພື່ອພິຈາລະນາ;

5. ສະເໜີຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ອອກຄຳສັ່ງເປີດການສືບສວນ-ສອບສວນ, ຄຳສັ່ງພາຕົວ, ຄຳສັ່ງກັກຕົວ, ຄຳສັ່ງຄຸມຕົວຢູ່ກັບທີ່, ຄຳສັ່ງ ຍຶດ ຫຼື ອາຍັດຊັບ, ຄຳສັ່ງປ່ອຍຕົວຜູ້ຖືກສົງໄສ, ຄຳສັ່ງ ໂຈະ ຫຼື ຊັດມ້ຽນ ຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ;

6. ອອກ ໝາຍຮຽກ, ໝາຍເຊີນ, ບັດເຊີນ ກ່ຽວກັບຄະດີການສໍ້ລາດບັງຫຼວງ ແລະ ຄະດີການຟອກເງິນທີ່ຕິດພັນກັບການສໍ້ລາດບັງຫຼວງ;

7. ສະເໜີປະທານຄະນະກຳມະການປົກຄອງຂັ້ນເມືອງ ພິຈາລະນາແກ້ໄຂຜົນການກວດກາການຕ້ານການສໍ້ລາດບັງຫຼວງ ໃນຂອບເຂດການຄຸ້ມຄອງຂອງຕົນ. ໃນກໍລະນີບໍ່ພິຈາລະນາ ຫຼື ພິຈາລະນາແລ້ວ ແຕ່ເຫັນວ່າບໍ່ຖືກຕ້ອງ ກໍມີສິດລາຍງານຕໍ່ຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ແຂວງ, ນະຄອນຫຼວງ ເພື່ອພິຈາລະນາ;

8. ສະເໜີ ອົງການທີ່ກ່ຽວຂ້ອງ ພິຈາລະນາຄືນບັນຫາທີ່ບໍ່ເປັນເອກະພາບ ລະຫວ່າງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງເມືອງ, ເທດສະບານ, ນະຄອນ ກັບຫົວໜ້າຫ້ອງການຂັ້ນເມືອງ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ. ໃນກໍລະນີບໍ່ພິຈາລະນາຄືນ ຫຼື ພິຈາລະນາແລ້ວ ແຕ່ເຫັນວ່າບໍ່ຖືກຕ້ອງ ກໍມີສິດລາຍງານຕໍ່ປະທານຄະນະກຳມະການປົກຄອງຂັ້ນເມືອງ ເພື່ອພິຈາລະນາ;

9. ສະຫຼຸບ ແລະ ລາຍງານ ການຈັດຕັ້ງປະຕິບັດວຽກງານຕ້ານການສໍ້ລາດບັງຫຼວງຕໍ່ຂັ້ນເທິງ ຢ່າງເປັນປົກກະຕິ;

10. ນຳໃຊ້ສິດ ແລະ ປະຕິບັດໜ້າທີ່ອື່ນ ຕາມທີ່ໄດ້ກຳນົດໄວ້ໃນກົດໝາຍ.

**ມາດຕາ 77 (ໃໝ່) ຮອງຫົວໜ້າອົງການຂອງອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ**

ຮອງຫົວໜ້າອົງການຂອງອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານຄະນະກຳມະການປົກຄອງຂັ້ນເມືອງ ຕາມການສະເໜີຂອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ.

ຮອງຫົວໜ້າອົງການຂອງອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ ມີ ສິດ ແລະ ໜ້າທີ່ ຊ່ວຍຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ ແລະ ຮັບຜິດຊອບວຽກງານໃດໜຶ່ງ ຕາມການມອບໝາຍຂອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ. ໃນກໍລະນີ ຫົວໜ້າບໍ່ຢູ່ ຫຼື ຕິດຂັດ ຮອງຫົວໜ້າຜູ້ໄດ້ຮັບມອບໝາຍຈາກຫົວໜ້າ ເປັນຜູ້ຮັກສາການແທນ.

**ມາດຕາ 78 (ໃໝ່) ຫົວໜ້າ, ຮອງຫົວໜ້າໜ່ວຍງານຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ**

ຫົວໜ້າ, ຮອງຫົວໜ້າໜ່ວຍງານຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ ຖືກແຕ່ງຕັ້ງ, ຍົກຍ້າຍ ຫຼື ປົດຕຳແໜ່ງ ໂດຍປະທານຄະນະກຳມະການປົກຄອງຂັ້ນເມືອງ ຕາມການສະເໜີຂອງຫົວໜ້າອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ, ຮັບຜິດຊອບໂດຍກົງຕໍ່ຫົວໜ້າ, ຮອງຫົວໜ້າ ອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ. ໃນກໍລະນີ ຫົວໜ້າບໍ່ຢູ່ ຫຼື ຕິດຂັດ ຮອງຫົວໜ້າຜູ້ໄດ້ຮັບມອບໝາຍຈາກຫົວໜ້າ ເປັນຜູ້ຮັກສາການແທນ.

ສຳລັບ ສິດ ແລະ ໜ້າທີ່ ຂອງ ຫົວໜ້າ, ຮອງຫົວໜ້າ ໜ່ວຍງານ ຂອງອົງການຕ້ານການສໍ້ລາດບັງຫຼວງ ເມືອງ, ເທດສະບານ, ນະຄອນ ໄດ້ກຳນົດໄວ້ໃນລະບຽບການຕ່າງຫາກ.

## ພາກທີ VI
## ຂໍ້ຫ້າມ

**ມາດຕາ 79 (ໃໝ່) ຂໍ້ຫ້າມທົ່ວໄປ**

ຫ້າມ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ມີພຶດຕິກຳ ດັ່ງນີ້:

1. ປົກປ້ອງ, ປົກປິດ, ເຊື່ອງອຳ, ປ່ຽນແປງ ຫຼື ທຳລາຍຂໍ້ມູນ, ຫຼັກຖານ ກ່ຽວກັບການສໍ້ລາດບັງຫຼວງ;
2. ກີດໜ່ວງ ຖ່ວງດຶງ ຫຼື ຂັດຂວາງການດຳເນີນຄະດີຂອງເຈົ້າໜ້າທີ່ສືບສວນ-ສອບສວນຄະດີການສໍ້ລາດບັງຫຼວງ;
3. ແຊກແຊງ, ກ້າວກ່າຍ, ໝິ່ນປະໝາດ, ໃຊ້ຄວາມຮຸນແຮງ, ນາບຂູ່, ທຳຮ້າຍຮ່າງກາຍ ເຈົ້າໜ້າທີ່ສືບສວນ-ສອບສວນຄະດີການສໍ້ລາດບັງຫຼວງ ຫຼື ບຸກຄົນອື່ນທີ່ກ່ຽວຂ້ອງ;
4. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 80 (ໃໝ່) ຂໍ້ຫ້າມສຳລັບຜູ້ຖືກສືບສວນ-ສອບສວນ**

ຫ້າມຜູ້ຖືກສືບສວນ-ສອບສວນ ມີພຶດຕິກຳ ດັ່ງນີ້:

1. ປະຕິເສດການສະໜອງຂໍ້ມູນ, ຫຼັກຖານ, ເອກະສານ ກ່ຽວກັບການດຳເນີນການສືບສວນ-ສອບສວນ;
2. ລາຍງານ, ໃຫ້ການ, ສະໜອງຂໍ້ມູນ, ຫຼັກຖານ, ເອກະສານ ບໍ່ຖືກກັບຄວາມເປັນຈິງ;
3. ຊຸກເຊື່ອງ, ທຳລາຍເອກະສານ, ວັດຖຸສິ່ງຂອງ ຊຶ່ງເປັນຫຼັກຖານທີ່ພົວພັນເຖິງການສໍ້ລາດບັງຫຼວງ;
4. ຂັດຂວາງ, ສ້າງຄວາມຫຍຸ້ງຍາກ ຫຼື ນາບຂູ່ ເຈົ້າໜ້າທີ່ສືບສວນ-ສອບສວນຄະດີການສໍ້ລາດບັງຫຼວງ;
5. ຊື້ຈ້າງ, ໃຫ້ສິນບົນພະນັກງານ ຫຼື ເຈົ້າໜ້າທີ່ສືບສວນ-ສອບສວນຄະດີການສໍ້ລາດບັງຫຼວງ;
6. ມີພຶດຕິກຳອື່ນ ທີ່ເປັນການລະເມີດກົດໝາຍ.

**ມາດຕາ 81 (ໃໝ່) ຂໍ້ຫ້າມສໍາລັບເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ພະນັກງານ ທີ່ເຮັດວຽກງານຕ້ານການສໍ້ລາດບັງຫຼວງ**

ຫ້າມ ເຈົ້າໜ້າທີ່ສືບສວນ-ສອບສວນ ແລະ ພະນັກງານທີ່ເຮັດວຽກງານຕ້ານການສໍ້ລາດບັງຫຼວງ ມີພຶດຕິກໍາ ດັ່ງນີ້:

1. ເປີດເຜີຍຄວາມລັບ ແລະ ຂໍ້ມູນສ່ວນຕົວ ຂອງຜູ້ຖືກສືບສວນ-ສອບສວນ;

2. ຮ່ວມມືກະທໍາຜິດ ຫຼື ປົກປ້ອງ ຜູ້ຖືກສືບສວນ-ສອບສວນ;

3. ປິດບັງ, ເຊື່ອງອໍາ ຫຼື ທໍາລາຍຂໍ້ມູນ, ຫຼັກຖານ ກ່ຽວກັບການດໍາເນີນຄະດີການສໍ້ລາດບັງຫຼວງ;

4. ກົດໜ່ວງ ຖ່ວງດຶງ, ປອມແປງ ເອກະສານ, ເລີ່ນເລີ້ໃນການປະຕິບັດໜ້າທີ່, ປະລະໜ້າທີ່ ແລະ ຂາດຄວາມຮັບຜິດຊອບຕໍ່ວຽກງານຕ້ານການສໍ້ລາດບັງຫຼວງ;

5. ສວຍໃຊ້ໜ້າທີ່ຕໍາແໜ່ງ, ຂໍເອົາ, ທວງເອົາ ຫຼື ຮັບເອົາສິນບົນ, ບັງຄັບ, ນາບຂູ່ ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ຊຶ່ງພາໃຫ້ເສຍຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ;

6. ມີພຶດຕິກໍາອື່ນ ທີ່ເປັນການລະເມີດກົດໝາຍ.

## ພາກທີ VII
## ການຕິດຕາມ ກວດກາ ວຽກງານຕ້ານການສໍ້ລາດບັງຫຼວງ

**ມາດຕາ 82 (ໃໝ່) ການຕິດຕາມ ກວດກາ ວຽກງານຕ້ານການສໍ້ລາດບັງຫຼວງ**

ການຕິດຕາມ ກວດກາວຽກງານຕ້ານການສໍ້ລາດບັງຫຼວງ ມີ ການຕິດຕາມ ກວດກາພາຍໃນ ແລະ ການຕິດຕາມ ກວດກາພາຍນອກ.

1. ການຕິດຕາມ ກວດກາພາຍໃນ ຊຶ່ງແມ່ນ ການຕິດຕາມ ກວດກາ ການເຄື່ອນໄຫວວຽກງານຕ້ານການສໍ້ລາດບັງຫຼວງ ໃນລະບົບການຈັດຕັ້ງ ຂອງອົງການຕ້ານການສໍ້ລາດບັງຫຼວງ ແຕ່ລະຂັ້ນ ເພື່ອຮັບປະກັນໃຫ້ວຽກງານດັ່ງກ່າວ ດໍາເນີນໄປດ້ວຍດີ, ມີປະສິດທິພາບ, ປະສິດທິຜົນ, ໂປ່ງໃສ, ເດັດຂາດ ແລະ ຍຸຕິທໍາ;

ອົງການຕ້ານການສໍ້ລາດບັງຫຼວງ ແຕ່ລະຂັ້ນ ຕ້ອງກວດກາພາຍໃນ ຢ່າງເປັນປົກກະຕິ.

2. ການຕິດຕາມ ກວດກາພາຍນອກ ຊຶ່ງແມ່ນ ການຕິດຕາມກວດກາ ຂອງສະພາແຫ່ງຊາດ, ສະພາປະຊາຊົນຂັ້ນແຂວງ; ການຕິດຕາມ ກວດກາ ອົງການກວດສອບແຫ່ງລັດ, ແນວລາວສ້າງຊາດ, ສະຫະພັນນັກຮົບເກົ່າລາວ, ອົງການຈັດຕັ້ງມະຫາຊົນ, ອົງການຈັດຕັ້ງສັງຄົມ, ສື່ມວນຊົນ ແລະ ພົນລະເມືອງ ຕໍ່ການເຄື່ອນໄຫວວຽກງານຂອງອົງການຕ້ານການສໍ້ລາດບັງຫຼວງ ແຕ່ລະຂັ້ນ.

**ມາດຕາ 83 (ໃໝ່) ເນື້ອໃນ ການກວດກາ**

ການກວດກາ ມີເນື້ອໃນ ດັ່ງນີ້:

1. ການຈັດຕັ້ງປະຕິບັດກົດໝາຍ ກ່ຽວກັບວຽກງານຕ້ານການສໍ້ລາດບັງຫຼວງ;

2. ການປະຕິບັດ ນະໂຍບາຍ ຕໍ່ຜູ້ມີຜົນງານ ແລະ ການນໍາໃຊ້ມາດຕະການສະກັດກັ້ນ ແລະ ມາດຕະການທາງກົດໝາຍ ຕໍ່ຜູ້ລະເມີດ;

3. ເນື້ອໃນອື່ນທີ່ເຫັນວ່າມີຄວາມຈໍາເປັນ.

**ມາດຕາ 84 (ໃໝ່) ຮູບການ ການກວດກາ**

ການກວດກາ ມີ ສາມຮູບການ ດັ່ງນີ້:

1. ການກວດກາ ຕາມແຜນການປົກກະຕິ ຊຶ່ງແມ່ນ ການດຳເນີນການກວດກາ ຕາມແຜນການ ການບໍລິຫານຂອງອົງການຕ້ານການສໍ້ລາດບັງຫຼວງ ແຕ່ລະຂັ້ນ ທີ່ໄດ້ວາງໄວ້ ໂດຍມີການແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ລ່ວງໜ້າ;

2. ການກວດກາຕາມຄຳສັ່ງ ຫຼື ຄຳສະເໜີ ຊຶ່ງແມ່ນ ການດຳເນີນການກວດກາ ຕາມຄຳສັ່ງ, ຂໍ້ຕົກລົງ, ຄຳແນະນຳ, ແຈ້ງການ ຫຼື ຄຳສະເໜີ ຂອງຫົວໜ້າອົງການບໍລິຫານ, ຂອງອົງການຕ້ານການສໍ້ລາດບັງຫຼວງ ແຕ່ລະຂັ້ນ ໂດຍມີການແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ;

3. ການກວດກາ ແບບກະທັນຫັນ ຊຶ່ງແມ່ນ ການດຳເນີນການກວດກາ ຢ່າງຮີບດ່ວນ ໂດຍບໍ່ມີການແຈ້ງໃຫ້ເປົ້າໝາຍຖືກກວດກາ ຮູ້ກ່ອນລ່ວງໜ້າ.

## ພາກທີ VIII
## ງົບປະມານ ແລະ ຕາປະທັບ

**ມາດຕາ 85 (ໃໝ່) ງົບປະມານ**

ງົບປະມານ ຂອງອົງການຕ້ານການສໍ້ລາດບັງຫຼວງສູນກາງ ແມ່ນ ຫົວໜ່ວຍງົບປະມານດຽວກັນກັບອົງການກວດກາແຫ່ງລັດ ເພື່ອນຳໃຊ້ເຂົ້າໃນການເຄື່ອນໄຫວວຽກງານຂອງຕົນ.

ງົບປະມານຂອງອົງການຕ້ານການສໍ້ລາດບັງຫຼວງ ຂັ້ນໃດ ແມ່ນ ຂຶ້ນກັບງົບປະມານຂອງອົງການບໍລິຫານຂັ້ນນັ້ນ.

**ມາດຕາ 86 (ໃໝ່) ຕາປະທັບ**

ອົງການຕ້ານການສໍ້ລາດບັງຫຼວງ ແຕ່ລະຂັ້ນ ມີຕາປະທັບສະເພາະຂອງຕົນ.

## ພາກທີ IX
## ນະໂຍບາຍຕໍ່ຜູ້ມີຜົນງານ ແລະ ມາດຕະການຕໍ່ຜູ້ລະເມີດ

**ມາດຕາ 87 ນະໂຍບາຍຕໍ່ຜູ້ມີຜົນງານ**

ບຸກຄົນ, ນິຕິບຸກຄົນ ຫຼື ການຈັດຕັ້ງ ທີ່ມີຜົນງານດີເດັ່ນໃນການປະຕິບັດກົດໝາຍສະບັບນີ້ ເປັນຕົ້ນການໃຫ້ການຮ່ວມມື, ລາຍງານ, ສະໜອງຂໍ້ມູນ, ຫຼັກຖານ ກ່ຽວກັບການສໍ້ລາດບັງຫຼວງ ຈະໄດ້ຮັບການປົກປ້ອງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 7 ຂອງກົດໝາຍສະບັບນີ້ ແລະ ໄດ້ຮັບການຍ້ອງຍໍ ຫຼື ນະໂຍບາຍອື່ນ ຕາມລະບຽບການ.

**ມາດຕາ 88 (ປັບປຸງ) ມາດຕະການຕໍ່ຜູ້ລະເມີດ**

ພະນັກງານ, ນິຕິບຸກຄົນ ທີ່ໄດ້ລະເມີດກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງລັດ, ລວມໝູ່, ສິດ ແລະ ຜົນປະໂຫຍດອັນຊອບທຳຂອງພົນລະເມືອງ ຈະຖືກ ສຶກສາອົບຮົມ, ລົງວິໄນ, ປັບໃໝ ຫຼື ໃຊ້ແທນຄ່າເສຍຫາຍທາງແພ່ງ ທີ່ຕົນໄດ້ກໍ່ຂຶ້ນ ຫຼື ຖືກລົງໂທດທາງອາຍາ ຕາມກົດໝາຍ.

**ມາດຕາ 89 (ປັບປຸງ) ມາດຕະການສຶກສາອົບຮົມ**

ຜ່ານການດຳເນີນການກວດກາຂອງເຈົ້າໜ້າທີ່ ຫຼື ພະນັກງານທີ່ເຮັດວຽກງານຕ້ານການສໍ້ລາດບັງຫຼວງ ຫາກພົບເຫັນ ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ ແລະ ການໂກງການປະມູນ ຫຼື ການສໍາປະທານ ຂອງພະນັກງານ ຊຶ່ງກໍ່ຄວາມເສຍຫາຍທີ່ມີມູນຄ່າບໍ່ເກີນ 5,000,000 ກີບ ແຕ່ຜູ້ກະທໍາຜິດມີຄວາມຈິງໃຈລາຍງານ, ຮັບສາລະພາບວ່າໄດ້ກະທໍາຜິດຕໍ່ການຈັດຕັ້ງ ແລະ ໄດ້ສົ່ງຊັບທີ່ເອົາໄປ ໂດຍບໍ່ຖືກຕ້ອງນັ້ນ ຄືນໃຫ້ຢ່າງຄົບຖ້ວນແລ້ວ ຜູ້ກ່ຽວ ກໍຈະຖືກສຶກສາອົບຮົມ.

**ມາດຕາ 90 (ປັບປຸງ) ມາດຕະການທາງວິໄນ**

ຜ່ານການດຳເນີນການກວດກາ ຂອງເຈົ້າໜ້າທີ່ ຫຼື ພະນັກງານທີ່ເຮັດວຽກງານຕ້ານການສໍ້ລາດບັງຫຼວງ ຫາກພົບເຫັນ ການລັກໂລບ, ປອມແປງມາດຕະຖານເຕັກນິກກໍ່ສ້າງ ແລະ ການໂກງການປະມູນ ຫຼື ການສໍາປະທານ ຂອງພະນັກງານ ຊຶ່ງກໍ່ຄວາມເສຍຫາຍທີ່ມີມູນຄ່າບໍ່ເກີນ 5,000,000 ກີບ ແຕ່ຜູ້ກະທໍາຜິດບໍ່ຈິງໃຈລາຍງານ ຫຼື ຫຼົບຫຼີກຈາກຄວາມຜິດ ຜູ້ກ່ຽວ ກໍຈະຖືກລົງວິໄນ ຕາມແຕ່ລະກໍລະນີ ດັ່ງນີ້:

1. ສໍາລັບ ພະນັກງານຂອງລັດ

1.1. ຕິຕຽນ, ກ່າວເຕືອນຄວາມຜິດ ແລ້ວບັນທຶກໄວ້ໃນສໍານວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;

1.2. ໂຈະການເລື່ອນຊັ້ນ, ຂັ້ນເງິນເດືອນ, ການຍ້ອງຍໍ ແລ້ວບັນທຶກໄວ້ໃນສໍານວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;

1.3. ປົດຕໍາແໜ່ງ ຫຼື ຍົກຍ້າຍໄປຮັບໜ້າທີ່ອື່ນ ທີ່ຕໍ່າກວ່າເກົ່າ ແລ້ວບັນທຶກໄວ້ໃນສໍານວນເອກະສານຊີວະປະຫວັດຂອງຜູ້ກ່ຽວ;

1.4. ໃຫ້ອອກຈາກລັດຖະການ ໂດຍບໍ່ໄດ້ຮັບນະໂຍບາຍໃດ.

ຜູ້ຖືກລົງວິໄນ ຕ້ອງສົ່ງຊັບສິນທີ່ຕົນເອົາໄປ ໂດຍບໍ່ຖືກຕ້ອງນັ້ນຄືນໃຫ້ການຈັດຕັ້ງຢ່າງຄົບຖ້ວນ.

2. ສໍາລັບພະນັກງານວິສາຫະກິດ, ພະນັກງານຕ່າງປະເທດ ແລະ ພະນັກງານອົງການຈັດຕັ້ງສາກົນ

2.1. ກ່າວເຕືອນຄວາມຜິດ;

2.2. ລົງວິໄນຕາມກົດລະບຽບຂອງວິສາຫະກິດ ແລະ ລະບຽບການຂອງອົງການຈັດຕັ້ງທີ່ກ່ຽວຂ້ອງ.

**ມາດຕາ 91 (ໃໝ່) ມາດຕະການປັບໃໝ**

ພະນັກງານຜູ້ໃດ ມີພຶດຕິກໍາທີ່ເປັນການສໍ້ລາດບັງຫຼວງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງ ລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ ນອກຈາກຈະໄດ້ຮັບໂທດຕັດອິດສະລະພາບ ແລະ ໂທດປັບໃໝທາງອາຍາແລ້ວ ຍັງຕ້ອງໄດ້ຖືກປັບໃໝຕື່ມອີກ ສິບສ່ວນຮ້ອຍ (10%) ຂອງມູນຄ່າເສຍຫາຍ ທີ່ຕົນໄດ້ກໍ່ຂຶ້ນ.

**ມາດຕາ 92 (ປັບປຸງ) ມາດຕະການທາງແພ່ງ**

ພະນັກງານຜູ້ໃດ ມີພຶດຕິກໍາທີ່ເປັນການສໍ້ລາດບັງຫຼວງ ຕາມທີ່ໄດ້ກໍານົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້ ຊຶ່ງກໍ່ຄວາມເສຍຫາຍໃຫ້ແກ່ຜົນປະໂຫຍດຂອງ ລັດ, ສັງຄົມ ຫຼື ສິດ ແລະ ຜົນປະໂຫຍດອັນຊອບທໍາຂອງພົນລະເມືອງ ນອກຈາກຈະໄດ້ຮັບໂທດທາງອາຍາແລ້ວ ຍັງຈະຕ້ອງໄດ້ໃຊ້ແທນຄ່າເສຍຫາຍທາງແພ່ງທີ່ຕົນໄດ້ກໍ່ຂຶ້ນຢ່າງຄົບຖ້ວນ ແລະ ຊັບສິນທີ່ໄດ້ມາຈາກການກະທໍາຜິດນັ້ນ ກໍຈະຖືກຮິບເປັນຂອງລັດ ຫຼື ສົ່ງຄືນໃຫ້ເຈົ້າກໍາມະສິດ ຫຼື ຜູ້ເປັນເຈົ້າຂອງ.

**ມາດຕາ 93 (ປັບປຸງ) ມາດຕະການທາງອາຍາ**

ພະນັກງານຜູ້ໃດ ມີພຶດຕິກຳທີ່ເປັນການສໍ້ລາດບັງຫຼວງ ຕາມທີ່ໄດ້ກຳນົດໄວ້ໃນມາດຕາ 11 ຂອງກົດໝາຍສະບັບນີ້ ຈະຖືກລົງໂທດຕາມທີ່ໄດ້ກຳນົດໄວ້ໃນປະມວນກົດໝາຍອາຍາ.

ສຳລັບ ວິສາຫະກິດ ຫາກໄດ້ກະທຳຜິດໃນສະຖານການສໍ້ລາດບັງຫຼວງ ຈະຖືກຖອນໃບອະນຸຍາດດຳເນີນທຸລະກິດ ຖາວອນ ຫຼື ໄລຍະໃດໜຶ່ງ ຕາມແຕ່ລະກໍລະນີ.

ສຳລັບ ພະນັກງານຕ່າງປະເທດ, ພະນັກງານອົງການຈັດຕັ້ງສາກົນ ຫາກໄດ້ກະທຳຜິດໃນສະຖານການສໍ້ລາດບັງຫຼວງ ຈະຖືກດຳເນີນຄະດີຕາມກົດໝາຍຂອງ ສປປລາວ, ເນລະເທດອອກຈາກປະເທດ ແລະ ບໍ່ອະນຸຍາດໃຫ້ເຂົ້າປະເທດ.

ສຳລັບອົງການຈັດຕັ້ງສາກົນ ຫາກໄດ້ກະທຳຜິດໃນສະຖານການສໍ້ລາດບັງຫຼວງ ຈະຖືກຖອນໃບອະນຸຍາດການເຄື່ອນໄຫວ ຖາວອນ ຫຼື ໄລຍະໃດໜຶ່ງ ຕາມແຕ່ລະກໍລະນີ.

## ພາກທີ X
## ບົດບັນຍັດສຸດທ້າຍ

**ມາດຕາ 94 ການຈັດຕັ້ງປະຕິບັດ**

ລັດຖະບານ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ, ອົງການຕ້ານການສໍ້ລາດບັງຫຼວງ, ອົງການໄອຍະການປະຊາຊົນ, ສານປະຊາຊົນ ແລະ ອົງການອື່ນທີ່ກ່ຽວຂ້ອງ ເປັນຜູ້ຈັດຕັ້ງປະຕິບັດກົດໝາຍສະບັບນີ້.

**ມາດຕາ 95 (ປັບປຸງ) ຜົນສັກສິດ**

ກົດໝາຍສະບັບນີ້ ມີຜົນສັກສິດ ນັບແຕ່ວັນທີ 12 ກັນຍາ 2024 ພາຍຫຼັງ ປະທານປະເທດ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດປະກາດໃຊ້ ແລະ ໄດ້ລົງຈົດໝາຍເຫດທາງລັດຖະການ ເປັນຕົ້ນໄປ.

ກົດໝາຍສະບັບນີ້ ປ່ຽນແທນກົດໝາຍວ່າດ້ວຍການຕ້ານການສໍ້ລາດບັງຫຼວງ ສະບັບເລກທີ 27/ສພຊ, ລົງວັນທີ 18 ທັນວາ 2012.

**ປະທານສະພາແຫ່ງຊາດ**

ປອ ໄຊສົມພອນ ພົມວິຫານ